*Journal of Science and Teacher Education (JLSTE), 1*(2), 299-309

# ປັດໄຈທີ່ສົ່ງຜົນຕໍ່ການອ່ານອອກຂຽນເປັນຂອງນັກຮຽນຊັ້ນປະຖົມສຶກສາປີທີ 3 ເມືອງ ສຸຂຸມາ ແຂວງຈຳປາສັກ

*ນາງ ຄອນສະຫວັນ ຫຼຽນວິໄຊ, ສົມໄຊ ເທບສົມບັດ, ປະກາຍເພັດ ເມກຈອນ*

*ພາກວິຊາ ສ້າງຄູປະຖົມ ວິທະຍາໄລຄູປາກເຊ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ 1) ເພື່ອສຶກສາຜົນການອ່ານອອກຂຽນເປັນຂອງປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກ; 2) ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການອ່ານອອກຂຽນເປັນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກ ແລະ 3) ເພື່ອສຶກສາແນວທາງໃນການພັດທະນາການອ່ານ ການຂຽນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກ. ການເລືອກກຸ່ມຕົວຢ່າງແມ່ນນຳໃຊ້ສູດຄຳນວນຂອງ Kerjcie and Morgan ໂດຍເລືອກແບບເຈາະຈົງເຊິ່ງມີຈຳນວນ 193 ຄົນ ຄູສອນມີຈຳນວນ 56 ຄົນ , ນັກຮຽນ 137 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບທົດສອບນັກຮຽນ ແລະ ແບບສອບຖາມຄວາມຄິດເຫັນສຳລັບຄູ. ສະຖິຕິທີ່ນຳໃຊ້ແມ່ນສະຖິຕິພັນລະນາໂດຍໃຊ້ໂປແກຣມສຳເລັດຮູບ SPSS ໃນການການວິເຄາະຂໍ້ມູນຂອງແບບທົດສອບ ແລະ ແບບສອບຖາມ. ຜົນການສຶກສາຜົນພົບວ່າ ນັກຮຽນມີຜົນການຮຽນຢູ່ໃນລະດັບອ່ອນກວມເອົາ 64.15% ຮອງລົງມາແມ່ນລະດັບດີກວມເອົາ 20.92% ສ່ວນລະດັບດີຫຼາຍມີພຽງ 14.48% ແລະ ຕ່ຳສຸດແມ່ນກວມເອົາ 0.60% ຈັດໃນລະດັບປານກາງ . ຜົນການສຶກສາລະດັບປັດໄຈຕາມຄວາມຄິດເຫັນຂອງຄູກ່ຽວກັບການອ່ານອອກຂຽນເປັນຂອງນັກຮຽນ ຂັ້ນ ປ.3 ພົບວ່າ ແຕ່ລະປັດໄຈຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ( $\bar{X}$ = 3.67 S.D = 0.27) ໃນນັ້ນມີຄວາມຄິດເຫັນຫຼາຍກວ່າໝູ່ແມ່ນດ້ານຄູສອນ ມີຄ່າສະເລ່ຍ ( $\bar{X}$ = 3.87 S.D = 0.32), ຮອງລົງມາແມ່ນດ້ານຜູ້ຮຽນມີຄ່າສະເລ່ຍ ( $\bar{X}$ = 3.58 S.D = 0.41) ຈັດໃນລະດັບຫຼາຍ ແລະ ມີຄວາມຄິດເຫັນໜ້ອຍກວ່າໝູ່ແມ່ນດ້ານການບໍລິຫານມີຄ່າສະເລ່ຍ ( $\bar{X}$ = 3.57 S.D = 0.33) ຈັດໃນລະດັບຫຼາຍ.

**ຄຳສຳຄັນ:** ການອ່ານອອກຂຽນໄດ້, ປັດໄຈ, ລະດັບຂອງນັກຮຽນ, ເມືອງ ສຸຂຸມາ, ແຂວງ ຈຳປາສັກ

---

**ຕິດຕໍ່ພົວພັນ: ນາງ ຄອນສະຫວັນ ຫຼຽນວິໄຊ; ໂທ: 020 99474317; ອີເມວ: khonesavanhlianvisay@gmail.com*

# Factors Affecting Grade 3 Students' Literacy in Soukhuma District, Champasak Province

**Khonesavanh LIANVISAY, Somxay THEPSOMBATH, Pakaiphet MEKCHONE*

*Faculty of Primary Teacher Education, Pakse Teacher Training College*

**Abstract**

This research is a study of the factors affecting Grade 3 students' literacy in Soukhuma District, Champasak Province. The purposes of this research were 1) to study the reading and writing performance of Grade 3 primary school students in Soukhuma District, Champasak Province; 2) to examine the factors that affect their reading and writing skills, and 3) to identify approaches for developing students' reading and writing skills. Cluster random sampling was used to select the sample group, which consisted of 193 participants, including 56 teachers and 137 students. The research instruments included a reading and writing test for students and a questionnaire for teachers. Data were analyzed using descriptive statistics with SPSS. The results showed that students' reading and writing performance was generally low: 64.15% of students demonstrated poor results, 20.93% performed below good, 14.48% performed at a very good level, and only 0.60% achieved the lowest level, which was classified as moderate overall. Regarding teachers' opinions on Grade 3 students' reading and writing, the findings revealed that each factor was rated at a high level with a mean value of ( $\bar{X}$ = 3.67 S.D = 0.27) Among these, the factor related to teachers was rated highest ( $\bar{X}$ = 3.87 S.D = 0.32) followed by factors related to learners ( $\bar{X}$ = 3.58 S.D = 0.41) and factors related to administration ( $\bar{X}$ = 3.57 S.D = 0.33).

***Keywords:*** *Literacy, Factor, Student performance, Soukhuma District, Champasak Province*

** Correspondence: Khonesavanh LIANVISAY; Tell: 02054755924; Email: ttpakaimouk@gmail.com*

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ພາສາລາວ ແມ່ນພາສາປະຈຳຊາດ ມີຄວາມສຳຄັນຫຼາຍໃນການສື່ສານພວກເຮົານຳໃຊ້ພາສາລາວເປັນເຄື່ອງມື ໃນການຕິດຕໍ່ສື່ສານ ໂດຍຜູ້ຮຽນຈະຕ້ອງມີຄວາມຮູ້,ຄວາມສາມາດ ໃນການນຳໃຊ້ທັກສະຕ່າງຕ່າງໆເຊັ່ນ: ການຟັງ,ການເວົ້າ,ການອ່ານ ແລະ ການຂຽນ. ນອກຈາກນັ້ນ, ຍັງເປັນການຖ່າຍທອດຄວາມຮູ້, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ ແຕ່ສະໄໝບູຮານ ມາສູ່ລູກຫຼານໃນປະຈຸບັນ ແລະ ອະນາຄົດ. ໃນ 4 ທັກສະທີ່ກ່າວມາ ລ້ວນແຕ່ມີຄວາມສຳຄັນ ແລະ ຂາດບໍ່ໄດ້ ໃນການສື່ສານເປັນຕົ້ນແມ່ນ ການຮຽນການສອນ.ການຈັດການຮຽນການສອນໃນປະຈຸບັນ ກະຊວງສຶກສາທິການ ແລະ ກິລາ ແມ່ນໄດ້ກຳນົດເອົາຮູບແບບເອົານັກຮຽນເປັນໃຈກາງ ເຂົ້າໃນທຸກຊັ້ນຮຽນ ເຊັ່ນ: ອະຊີວະສຶກສາ, ມັດທະຍົມສຶກສາ ແລະ ປະຖົມສຶກສາ (ກະຊວງສຶກສາທິການ ແລະ ກິລາ, 2023). ຫຼັກສູດ ຊັ້ນປະຖົມສຶກສາ ໄດ້ຮັບການປັບປຸງສຳເລັດແລ້ວ, ໂດຍສຸມໃສ່ການສະໜັບສະໜຸນດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ . ວຽກຈຸດສຸມນີ້ແມ່ນສອດຄ່ອງບູລິມະສິດຕົ້ນຕໍ ດ້ານຈຸດປະສົງນະໂຍບາຍແຜນຍຸດທະສາດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຂອງລັດທະບານລາວ ປີ 2021-2025 ສຸມໃສ່ ບູລິມະສິດຂອງຂະແໜງການສຶກສາເພື່ອ ປັບປຸງດ້ານເນື້ອໃນ ແລະ ທັກສະການສອນຂອງຄູປະຖົມເພື່ອປັບປຸງຜົນການຮຽນຂອງນັກຮຽນ. ເຖິງວ່າຫຼັກສູກຊັ້ນປະຖົມຈະມີການປັບປຸງ ສຳເລັດແລ້ວກໍຕາມ ແຕ່ກໍຍັງມີສິ່ງທ້າທາຍຫຼາຍຢ່າງ ໃນການນຳໃຊ້ມາດຕະຖານການສອນ ແລະ ຄວາມຈຳເປັນໃນການປັບປຸງລະບົບວິຊາຊີບຄູແບບຕໍ່ເນື່ອງ ເພື່ອນຳໄປສູ່ການປັບປຸງຜົນສຳເລັດ ດ້ານການຮຽນຂອງນັກຮຽນ (ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ, 2023). ຫຼັກສູດປະຖົມສຶກສາມີບົດບາດສຳຄັນໃນການສົ່ງເສີມການຮູ້ໜັງສືໃຫ້ແກ່ເດັກນ້ອຍຊັ້ນປະຖົມສຶກສາ ທັງນີ້ກໍຍ້ອນວ່າມີຫຼາຍຈຸດທີ່ສະໜັບສະໜູນການພັດທະນາທັກສະພື້ນຖານ ອັນດັບທຳອິດ ຫຼັກສູດມັກຈະເນັ້ນການຮຽນຮູ້ພາສາລາວ ເຊິ່ງເປັນພາສາຫຼັກໃນການຮຽນການສອນລວມທັງ ການພັດທະນາທັກສະການອ່ານ ແລະ ຂຽນພາສາລາວເພື່ອໃຫ້ເດັກໄດ້ນຳໃຊ້ພາສາເຂົ້າໃນຊີວິດປະຈຳວັນໄດ້ດີຂຶ້ນ (ກະຊວງສຶກສາທິການ ແລະ ກິລາລາ, 2021).

ນອກຈາກນີ້ ຫຼັກສູດຍັງລວມເຖິງການຝຶກທັກສະພື້ນຖານ ເຊັ່ນ ອ່ານອອກ,ຂຽນໄດ້ ແລະ ການຄິດໄລ່ເປັນເຊິ່ງເປັນທັກສະອັນສຳຄັນໃນການຮຽນຮູ້ໃນລະດັບສູງຂຶ້ນ (Vongxay, 2022) ໂດຍການນຳໃຊ້ສື່ການສອນທີ່ຫຼາກຫຼາຍເຊັ່ນ: ປື້ມແບບຮຽນ, ຮູບພາບ, ສື່ດິຈິຕອລ ຊ່ວຍໃຫ້ເດັກນ້ອຍເຂົ້າໃຈ ແລະ ມ່ວນຊື່ນກັບການຮຽນຮູ້ (Khamphou, 2020). ມັນຈະຊ່ວຍເສີມສ້າງຄວາມເຂົ້າໃຈ ແລະ ຄວາມສາມາດໃນການອ່ານ ແລະ ຂຽນ ( Phommapanya & Thongsa, 2023) ການມີສ່ວນຮ່ວມຂອງຄູ ແລະ ພໍ່ແມ່ໃນການສະຫນັບສະຫນູນການຮຽນຮູ້ຂອງເດັກນ້ອຍ ເຊັ່ນ: ການສ້າງສະພາບແວດລ້ອມທີ່ດີໃນການອ່ານ ແລະ ການຂຽນຢູ່ເຮືອນກໍ່ເປັນອີກປັດໄຈໜຶ່ງທີ່ມີຄວາມສຳຄັນ (Sounthavong, 2023) ຫຼັກສູດການສອນທີ່ດີ ແລະ ມີຄຸນນະພາບສາມາດຊ່ວຍເດັກນ້ອຍໄດ້ ມີພື້ນຖານທີ່ເຂັ້ມແຂງສຳລັບການພັດທະນາທັກສະການຮູ້ຫນັງສື ແລະ ກະກຽມສຳລັບການ

ຮຽນຮູ້ໃນອະນາຄົດ (La, 2022; Lee & Chang, 2023). ມາດຕະຖານກອ່ານໃນຂັ້ນ ປ.3 ນັກຮຽນສາສມາດອ່ານເປັນຄຳ, ສະກົດຄຳ,ອ່ານອອກສຽງຢ່າງຄ່ອງແຄ້ວ,ບອກຄວາມໝາຍຂອງ ບົດທີ່ອ່ານ ,ຈັບໃຈຄວາມໄດ້ ແລະ ມີມາລະຍາດໃນການອ່ານ. ນອກຈາກນັ້ນ, ນັກຮຽນຍັງຕ້ອງສາມາດຂຽນງາມ,ຂຽນທວາຍໄດ້ໄວ ແລະ ຖືກຕ້ອງ,ແຕ່ງປະໂຫຍກແຕ່ງປະໂຫຍກຂໍ້ຄວາມໄດ້ ຕາມກຳນົດ,ແຕ່ງເລື່ອງສັ້ນໆຕາມຮູບພາບ,ມີມາລະຍາດໃນການ ຂຽນຖືກຕ້ອງຕາມຫຼັກໄວຍາກອນ. ອີງໃສ່ມາດຕະຖານດັ່ງກ່າວ ເຫັນວ່າ : ບັນຫາທີ່ເປັນສິ່ງທ້າທາຍໃນການສອນສຶກສາຊັ້ນປະຖົມ ແມ່ນ ນັກຮຽນຍັງບໍ່ສາມາດອ່ານອອກ ແລະ ຂຽນເປັນ ໂດຍສະເພາະ ຂັ້ນ ປ 3 (ກະຊວງສຶກສາທິການ ແລະ ກິລາ, 2020).

ຜົນການປະເມີນ ການຮຽນພາສາລາວ ຂອງ (ASLO III , 2014) ໄດ້ສະແດງໃຫ້ເຫັນວ່າ: ນັກຮຽນຊັ້ນປະຖົມມີລະດັບຄວາມຮູ້ດ້ານພາສາລາວຍັງຕ່ຳ, ນັກຮຽນສ່ວນຫຼາຍບໍ່ສາມາດອ່ານຂໍ້ຄວາມງ່າຍໆ ແລະ ຈັບໃຈຄວາມໃນສິ່ງທີ່ໄດ້ອ່ານນັ້ນໄດ້ ຈົນກວ່າຮອດຊ່ວງທ້າຍ ຂອງຊັ້ນປະຖົມສຶກສາ. ນັກຮຽນ ປ.3 ມີ 32% ທີ່ອ່ານບໍ່ໄດ້, 25% ອ່ານໄດ້ແຕ່ບໍ່ເຂົ້າໃຈ, 34% ອ່ານໄດ້ເຂົ້າໃຈບາງຄຳ , ມີພຽງ 8% ທີ່ອ່ານໄດ້ດີ ແລະ ເຂົ້າໃຈ (ກະຊວງສຶກສາທິການ ແລະກິລາ, 2023). ຜ່ານການຈັດຕັ້ງປະຕິບັດ ບັນດາຄາດໝາຍທົ່ວແຂວງຈຳປາສັກ ເຫັນວ່າຕົວເລກຄາດໝາຍຈຳນວນໜຶ່ງ ກໍສາມາດຈັດຕັ້ງປະຕິບັດໄດ້ດີ, ຈຳນວນໜຶ່ງມີທ່າອຽງເພີ່ມຂຶ້ນແຕ່ບໍ່ບັນລຸຄາດໝາຍ ແລະ ຈຳນວນໜຶ່ງແມ່ນມີທ່າອຽງຫຼຸດລົງໃນແຕ່ລະປີ ຈຶ່ງພົບເຫັນບັນຫາ ດັ່ງນີ້: ອັດຕາເຂົ້າຮຽນລວມຕ່ຳ, ອັດຕາການປະລະ ແລະ ອັດຕາການຄ້າງຫ້ອງໃນແຕ່ລະຊັ້ນຮຽນຍັງສູງ; ນັກຮຽນໃນຊັ້ນປະຖົມ ແລະ ມັດທະຍົມສ່ວນໃຫ່ຍ ແມ່ນຍັງອ່ອນບາງວິຊາ ເຊັ່ນ: ພາສາລາວ ແລະ ຄະນິດສາດ. ອີງໃສ່ຜົນການສອບເສັງຈົບຊັ້ນ ປ 3 ນັກຮຽນທີ່ສອບຕົກ ເທົ່າກັບ 1,37% ແລະ ອັດຕາການຄ້າງຫ້ອງຍັງສູງໃນບາງຕົວເມືອງທີ່ຍັງໜ້າເປັນຫ່ວງ (ພະແນກສຶກສາແຂວງຈຳປາສັກ, ບົດສະຫຼຸບແລະແຜນການຈັດຕັ້ງປະຕິບັດແລະແຜນການສຶກສາ, 2022-2023).

ເມືອງ ສຸຂຸມາ ແຂວງຈຳປາສັກ ແມ່ນໜຶ່ງເມືອງທີ່ ດ້ອຍໂອກາດໃນ 40 ຕົວເມືອງໃນທົ່ວປະເທດ ທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດ ເນັ້ນໜັກພັດທະນາໃນການສຶກສາ.ໃນນັ້ນໄດ້ຮ່ວມມືກັບອົງການ USAID ພາຍໃຕ້ໂຄງການ LARN TO READ ເປົ້າໝາຍຂອງໂຄງການ ເພີ່ມການເຂົ້າເຖິງສື່ການຮຽນການສອນສຳລັບການອ່ານ, ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານກ່ຽວກັບການອ່ານ, ຊຸກຍູ້ໃຫ້ມີສ່ວນຮ່ວມໃນການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍສຳລັບການປັບປຸງ ທັກສະການອ່ານ ໂດຍສະເພາະເດັກຊົນເຜົ່າ ແລະ ເດັກທີ່ດ້ອຍໂອກາດ ອີງໃສ່ເປົ້າໝາຍແມ່ນເລັງໃສ່ ການພັດທະນາດ້ານການສຶກສາເວົ້າລວມ ເວົ້າສະເພາະແມ່ນສຸມໃສ່ ຂະບວນການຮຽນການສອນ ທັກສະການອ່ານໃນວິຊາ ພາສາລາວ ເພື່ອແກ້ໄຂບັນຫາການອ່ານອອກ,ຂຽນເປັນຂອງນັກຮຽນພາຍໃນເມືອງເຊິ່ງໄດ້ມີການຈັດຕັ້ງປະຕິບັດເລີ່ມແຕ່ ປີ 2018 ເປັນຕົ້ນມາມີຫຼາຍບັນດາກິດຈະກຳໃນການຝຶກອົບຮົມຄູສອນ ໃນ 4 ແຂວງ 16 ຕົວເມືອງ (ສະຖາບັນຄົ້ນຄວ້າວິທະຍາສາດ, 2023).

ຄວາມພະຍາຍາມທາງພາກລັດ ໄດ້ເຫັນຄວາມສຳຄັນໃນການແກ້ໄຂບັນຫາການອ່ານອອກ ຂຽນເປັນຂອງ ນັກຮຽນຊັ້ນປະຖົມ ໂດຍສະເພາະເມືອງ ສຸຂຸມາ ໃນສົກຮຽນ 2022-2023 ການປະຕິບັດບັນດາຄາດໝາຍທີ່ສະພາຮັບຮອງ ເຫັນວ່າ: ອັດຕາຄ້າງຫ້ອງຊັ້ນປະຖົມເທົ່າກັບ 0,3% ທຽບປີຜ່ານມາເພີ່ມຂຶ້ນ 0,1% ສະເພາະຊັ້ນ ປ 3 ນັກຮຽນສອບຕົກ ກວມເອົາ 1,74% ສະນັ້ນ,ສິ່ງກ່າວມານີ້ ກໍເປັນສັນຍານເຕືອນໃນການກຽມຄວາມພ້ອມຮັບມື ເພື່ອແກ້ໄຂບັນຫາໃນສົກປີຕໍ່ໄປ (ເມືອງສຸຂຸມາ, 2023-2024)

ຈາກບັນຫາດັ່ງກ່າວ ຄະນະຜູ້ຄົ້ນຄວ້າ ເຫັນວ່າມີຄວາມຈຳເປັນທີ່ຈະເປັນສ່ວນໜຶ່ງໃນການແກ້ໄຂ ການອ່ານ ແລະ ການຂຽນຂອງນັກຮຽນ. ຫວັງຢ່າງຍິ່ງວ່າ ຜົນການວິໄຈ ຈະເປັນປະໂຫຍດໃນການພັດທະນາ ການການຮຽນການສອນຂອງຄູ ແລະ ຜູ້ທີ່ກ່ຽວຂ້ອງ ໃຫ້ມີປະສິດທິພາບຍິ່ງຂຶ້ນໃນອະນາຄົດ. ດັ່ງນັ້ນ, ຈຶ່ງໄດ້ກຳນົດ ແລະ ພັດທະນາ ຫົວຂໍ້ສຶກສາ ຄື : ປັດໃຈທີ່ສົ່ງຜົນຕໍ່ ອ່ານອອກ ຂຽນເປັນຂອງນັກຮຽນຊັ້ນ ປະຖົມສຶກສາຂັ້ນ ປ 3 ໂຮງຮຽນປະຖົມ ເມືອງ ສຸຂຸມາ ແຂວງ ຈຳປາສັກ ເພື່ອສຶກສາຜົນການອ່ານອອກຂຽນເປັນຂອງນັກຮຽນ, ສຶກສາລະດັບປັດໃຈ ແລະ ສຶກສາແນວທາງໃນການພັດທະນາການອ່ານ, ການຂຽນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກ.

*1.2 ຄຳຖາມຂອງການຄົ້ນຄວ້າ*

1) ສະພາບການອ່ານອອກຂຽນເປັນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3.ໂຮງຮຽນປະຖົມເມືອງ ສຸຂຸມາ ແຂວງ ຈຳປາສັກເປັນແນວໃດ?

2) ລະດັບປັດໃຈທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກຢູ່ໃນລະດັບໃດ?

3) ແນວທາງໃນການພັດທະນາການອ່ານອອກຂຽນເປັນຂອງນັ້ນຮຽນຂັ້ນປ.3ມີຫຍັງແດ່?

*1.3 ຈຸດປະສົງຂອງການຄົ້ນຄວ້າ*

1) ເພື່ອສຶກສາຜົນການອ່ານອອກຂຽນເປັນຂອງປະຖົມສຶກສາ ຂັ້ນ ປ 3.ໂຮງຮຽນປະຖົມເມືອງ ສຸຂຸມາ ແຂວງ ຈຳປາສັກ.

2) ສຶກສາລະດັບປັດໃຈ ທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກ.

3) ເພື່ອສຶກສາແນວທາງໃນການພັດທະນາການອ່ານ, ການຂຽນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈຳປາສັກ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນພາກສ່ວນນີ້ ເປັນການທົບທວນ ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງມີດັ່ງນີ້:

*2.1. ທິດສະດີທີ່ກ່ຽວກັບການອ່ານອອກຂຽນເປັນ*

ການອ່ານອອກຂຽນເປັນ ແມ່ນທັກສະທີ່ສຳຄັນໃນການຮຽນຮູ້ໜັງສື ເຊິ່ງບໍ່ພຽງແຕ່ສາມາດອ່ານຫຼືຂຽນຕົວອັກສອນເທົ່ານັ້ນ ແຕ່ຍັງຕ້ອງທຳຄວາມເຂົ້າໃຈຄວາໝາຍທີ່ແທ້ຈິງຂອງຂໍ້ຄວາມທີ່ອ່ານ ແລະ ການສື່ສານທີ່ມີປະສິດທິພາບໂດຍຜ່ານການຂຽນ ລວມທັງ ການໃຊ້ພາສາຢ່າງມີປະສິດທິພາບ (World literacy foundation, 2020) ການພັດທະນາທັກສະນີ້ເປັນສິ່ງສຳຄັນ ໂດຍສະເພາະໃນບັນດາເດັກນ້ອຍ ແລະ ຜູ້ໃຫຍ່ທີ່ຍັງຂາດທັກສະເຫຼົ່ານີ້. ການມີທັກສະການຮູ້ຫນັງສືທີ່ດີສາມາດຊ່ວຍສະໜັບສະໜູນການຮຽນຮູ້ ແລະ ເພີ່ມໂອກາດໃນການໄດ້ຮັບວຽກເຮັດງານທຳ (National Center for Education Statistics, 2022.) ນອກຈາກນີ້ ການສຶກສາໃນປັດຈຸບັນຍັງສະແດງໃຫ້ເຫັນວ່າ ການອ່ານອອກຂຽນໄດ້ ບໍ່ພຽງແຕ່ເພີ່ມໂອກາດໃນໃນການໄດ້ຮັບວຽກເຮັດງານທຳແຕ່ຍັງຊ່ວຍໃຫ້ເຂົ້າເຖິງຊັບພະຍາກອນ ແລະ ໂອກາດຕ່າງໆໃນສັງຄົມຫຼາຍຂຶ້ນ. (UNESCO, 2021)

ໃນປັດຈຸບັນ ການອ່ານອອກ ຂຽນເປັນ ມີຄວາມສຳຄັນຫຼາຍຕໍ່ການພັດທະນາເສດຖະກິດ ສັງຄົມ ແລະ ການສ້າງຄຸນນະພາບຊີວິດທີ່ດີຂຶ້ນຂອງປະຊາກອນ ຄວາມສາມາດໃນການອ່ານອອກ ຂຽນເປັນ ແມ່ນປັດໄຈທີ່ສົ່ງເສີມການຮຽນຮູ້ແລະການເຂົ້າເຖິງຂໍ້ມູນພື້ນຖານເພື່ອພັດທະນາທັກສະອາຊີບ ແລະ ການດຳລົງຊີວິດແບບຍືນຍົງ (Khamphoumy, 2021) ເມື່ອປະຊາຊົນມີທັກສະການອ່ານ ການຂຽນທີ່ດີເຮັດໃຫ້ສາມາດເຂົ້າເຖິງຂໍ້ມູນດ້ານຕ່າງໆເຊັ່ນ ດ້ານສຸຂະພາບອະນາໄມ, ການກະເສດ ແລະ ສິ່ງແວດລ້ອມ ເຊິ່ງຈຳເປັນໃນການປັບປຸງຄຸນນະພາບຊີວິດ ແລະ ຫຼຸດຜ່ອນຄວາມທຸກຍາກ (Phetchaboua, 2023)

ການອ່ານອອກຂຽນເປັນຍັງມີບົດບາດໃນການສ້າງສັງຄົມການສື່ສານຢ່າງມີປະສິດທິພາບ, ຫຼຸດຜ່ອນຄວາມບໍ່ສະ ເ ໝີພາບທາງສັງຄົມ ແລະ ຊຸກຍູ້ສົ່ງເສີມການເຂົ້າເຖິງການສຶກສາ ແລະ ໂອກາດໃນຊີວິດ (UNESCO, 2022)

ການອ່ານອອກຂຽນເປັນ ຖືວ່າເປັນປັດໄຈສຳຄັນຫຼາຍໃນໄວຮຽນປະຖົມສຶກສາ ທັງນີ້ກໍຍ້ອນວ່າເປັນໄລຍະທີ່ເດັກກຳລັງສ້າງພື້ນຖານອັນໝັ້ນຄົງໃຫ້ແກ່ການຮຽນຮູ້ ແລະ ການດຳລົງຊີວິດໃນອະນາຄົດ. ບໍ່ພຽງແຕ່ທັກສະການອ່ານ ແລະການຂຽນເປັນເປັນກຸນແຈໃນການເຂົ້າເຖິງຄວາມຮູ້ໃນວິຊາຕ່າງໆ ເຊັ່ນ: ຄະນິດສາດ ແລະ ວິທະຍາສາດ ແຕ່ມັນຍັງເປັນເຄື່ອງມືທີ່ຊ່ວຍເສີມສ້າງຄວາມສາມາດໃນການຄິດວິເຄາະ ແລະ ພັດທະນາທັກສະການແກ້ໄຂບັນຫາທີ່ມີປະສິດທິພາບ (Roehler, 2021) .

ການອ່ານອອກ ຂຽນເປັນໃນລະດັບປະຖົມສຶກສາມີຜົນຕໍ່ການສື່ສານຂອງເດັກໃຫ້ມີຄວາມຊັດເຈນຊ່ວຍເພີ່ມໃຫ້ເດັກມີຄວາມໝັ້ນໃຈ ໃນຫ້ອງຮຽນ ແລະໃນສະຖານະການສັງຄົມຕ່າງໆ (Smith & Johnson, 2021)

ການອ່ານອອກຂຽນເປັນເຮັດໃຫ້ເດັກມີໂອກາດໄດ້ຄົ້ນຫາ ແລະຮຽນຮູ້ກ່ຽວກັບໂລກທີ່ກວ້າງຂຶ້ນ ລວມທັງການເຂົ້າໃຈຄວາມຄິດ ແລະຄວາມຮູ້ສຶກຂອງຄົນອື່ນ ນີ້ແມ່ນພື້ນຖານທີ່ສຳຄັນສຳລັບການພັດທະນາທັກສະທາງສັງຄົມແລະ ອາລົມຢ່າງເລິກເຊິ່ງ (Brown, 2023).

*2.2. ທິດສະດີທັກສະ ແລະ ເທັກນິກການສອນ*

ທັກສະ ແມ່ນຄວາມສາມາດໃນການກະທຳສິ່ງໃດສິ່ງໜຶ່ງຢ່າງມີ ຄວາມຊຳນານ ຜູ້ທີ່ເກີດທັກສະໃນສິ່ງໃດສິ່ງໜຶ່ງ ຍ່ອມກະທຳສິ່ງນັ້ນໄດ້ຢ່າງມີຄວາມຊຳນານ, ຖືກຕ້ອງ, ຄ່ອງແຄ້ວ ແລະ ສຳເລັດໄດ້ດ້ວຍດີ.

ທັກສະ ໝາຍເຖິງ ຄວາມສາມາດ, ຄວາມຊຳນານໃນການນຳວິທີ ສອນໄປໃຊ້ໃຫ້ເກີດປະໂຫຍດ ຫຼື ມີຄວາມໝາຍໃນທາງກວ້າງວ່າ ເປັນຄວາມສາມາດ, ຄວາມຊຳນານທີ່ນຳເອົາວິທີສອນນ, ສື່ການສອນ , ເທັກໂນໂລຢີ ແລະ ນະວັດຕະການການສຶກສາມາຊ່ວຍສອນ ເພື່ອໃຫ້ການສອນມີປະສິດທິພາບສູງໃນໄລຍະເວລາອັນສັ້ນໆ. ທັກສະການສອນທີ່ໃຊ້ເຂົ້າໃນການສອນມີຫຼາກຫຼາຍທັກສະເຊັ່ນ: ການນຳເຂົ້າສູ່ບົດຮຽນ, ການອະທິບາຍ, ການສ້າງຄວາມສົນໃຈ, ການໃຊ້ສື່ການສອນ, ການນຳໃຊ້ກະດານ, ການສ້າງແຮງຈູງໃຈ ແລະ ການສະຫຼຸບບົດຮຽນ ເປັນຕົ້ນ.

ດັ່ງນັ້ນ, ຜູ້ທີມີທັກສະການສອນຈຶ່ງໝາຍເຖິງ ຜູ້ທີ່ມີຄວາມຊຳນານໃນການສອນ ສາມາດດຳເນີນການສອນ ໄດ້ຢ່າງຄ່ອງແຄ້ວ, ມ່ວນຊື່ນ ແລະ ເຮັດໃຫ້ຜູ້ຮຽນເກີດ ຄວາມເຂົ້າໃຈໃນບົດຮຽນໄດ້ຢ່າງຊັດເຈນໃນເວລາທີ່ເໝາະສົມ ຄວາມໝາຍຂອງເທັກນິກການສອນ ເທັກນິກການສອນ ແມ່ນວິທີຕ່າງໆທີ່ໃຊ້ເຂົ້າໃນຂະບວນການສອນ, ຂັ້ນຕອນການສອນ, ວິທີການສອນ ຫຼື ການດຳເນີນ ການສອນ ເພື່ອຊ່ວຍໃຫ້ການສອນມີຄຸນນະພາບ ແລະ ປະສິດທິພາບຫຼາຍຂຶ້ນ; ມີເທັກນິກການສອນທີຫຼາກຫຼາຍ, ມີວິທີທີ່ເໝາະສົມກັບເນື້ອໃນ, ສ້າງຄວາມສົນໃຈ ແລະ ຄວາມຕ້ອງການແກ່ຜູ້ຮຽນ, ສາມາດອຳນວຍຄວາມສະດວກໃຫ້ຜູ້ ຮຽນເກີດການຮຽນຮູ້ ແລະ ບັນລຸເປົ້າໝາຍທີ່ກຳນົດໄວ້.

ຄວາມສຳພັນລະຫວ່າງທັກສະ ແລະ ເທັກນິກການສອນແມ່ນ ການຈັດການຮຽນຮູ້ ຫຼື ການຈັດການຮຽນ-ການສອນໃນປັດຈຸບັນ ທີ່ເນັ້ນໃຫ້ຜູ້ຮຽນເກີດການຮຽນຮູ້ດ້ວຍຂະບວນການຮຽນຮູ້ຂອງຕົນເອງ ໃຫ້ໄດ້ຕາມມາດຖານ ແລະ ຕົວຊີ້ວັດທີ່ຫຼັກສູດກຳນົດໄວ້.ຈາກຄວາມໝາຍຂອງທັກສະ ແລະ ເທັກນິກການສອນ ເຫັນໄດ້ວ່າ: ທັງສອງຢ່າງມີຄວາມສຳພັນກັນ, ມີຄວາມຄ້າຍຄືກັນ ແຕ່ບໍ່ແມ່ນເລື່ອງດຽວກັນ ເພາະຖ້າຈະເວົ້າວ່າ ຄູ ທ່ານໃດມີທັກສະການສອນຍ່ອມສະແດງໃຫ້ເຫັນວ່າ ຄູທ່ານນັ້ນໄດ້ລົງມືປະຕິບັດ ແລະ ຝຶກຝົນຈົນເກີດຄວາມຊຳນານ, ສາມາດປະຕິບັດໄດ້ຢ່າງຄ່ອງແຄ້ວ ເຊັ່ນ: ການອອກແບບການຈັດກິດຈະກຳ ຖ້າຫາກຕົວຊີ້ວັດໃນຫຼັກສູດກຳນົດໃຫ້ຜູ້ ຮຽນຮູ້ຫຍັງ ແລະ ເຮັດຫຍັງ ຄູທ່ານຈະສາມາດກຳນົດກິດຈະ ກໍໄດ້ວ່າ ຈະໃຊ້ຮູບແບບ ຫຼື ວິທີການສອນໃດ?, ມີຂັ້ນ ຕອນ, ຂະບວນການຄືແນວໃດ? ເພື່ອໃຫ້ຜູ້ຮຽນບັນລຸເປົ້າໝາຍທີ່ຫຼັກສູດກຳນົດໄວ້.

ການຈັດການຮຽນ-ການສອນເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ ຜູ້ສອນຕ້ອງມີທັກສະ ແລະ ເທັກນິກການສອນທີ່ຫຼາກຫຼາຍ ເພື່ອກະຕຸ້ນ ແລະ ຈູງໃຈໃຫ້ຜູ້ຮຽນເກີດຄວາມສົນໃຈໃຫ້ບົດຮຽນໃຫ້ຫຼາຍທີ່ສຸດ ເຊິ່ງເທັກນິກວິທີ ການສອນຕ່າງໆຕ້ອງອາໄສຫຼັກການ ແລະ ທິດສະດີທາງຈິດຕະວິທະຍາການ ຮຽນຮູ້ເຂົ້າມາກ່ຽວຂ້ອງກັບການຈັດການຮຽນຮູ້ຢ່າງຫຼາຍ. ສະນັ້ນ ຜູ້

ສອນ ຈຶ່ງຈຳເປັນຕ້ອງມີຄວາມຮູ້, ຄວາມເຂົ້າໃຈໃນການສຶກສາ ຈິດຕະວິທະຍາການ ຮຽນຮູ້ ເພາະການສອນ ແລະ ການຮຽນຮູ້ມີ ຄວາມກ່ຽວຂ້ອງ ແລະ ສຳພັນກັນ. ດັ່ງທີ່ ອາພອນ ໃຈທ່ຽງ (2553, ໜ້າ.19) ກ່າວໄວ້ວ່າ ຫຼັກການຮຽນຮູ້ ກັບຫຼັກການສອນ ມີຄວາມສຳພັນກັນ ຖ້າຜູ້ສອນເຂົ້າໃຈຫຼັກການຮຽນຮູ້ກໍຈະ ຈັດການສອນໃຫ້ສອດຄ່ອງສຳພັນກັນໄດ້ ການສອນທີ່ຄວນຄຳນຶງ ຫຼັກ ຈິດຕະວິທະຍາໃນການຮຽນຮູ້ຈະຊ່ວຍໃຫ້ຜູ້ຮຽນເກີດການ ຮຽນຮູ້ໄດ້ ສະດວກງ່າຍຂຶ້ນ ແລະ ເກີດທັດສະນະຄະຕິທີ່ດີຕໍ່ການ ຮຽນ ດັ່ງນັ້ນ ຄູຜູ້ສອນ ຈຶ່ງຕ້ອງນຳຫຼັກການຮຽນຮູ້ມາເປັນ ປະໂຫຍດຕໍ່ ການສອນໃຫ້ເກີດ ປະສິດທິພາບທີ່ສຸດ.

ຄຸນລັກສະນະຂອງຄູຜູ້ສອນທີ່ມີທັກສະ ແລະ ເທັກນິກ ການສອນທີ່ດີ ຕ້ອງເປັນຜູ້ທີ່ປັບຕົວໄດ້ຢ່າງທັນໂລກ ມີຄວາມ ເຂົ້າໃຈວ່າ ການສຶກສາທີ່ມີຄຸນນະພາບຈະຕ້ອງປ່ຽນຮູບແບບການ ຮຽນຮູ້ຂອງຜູ້ຮຽນຈາກການເປັນຜູ້ຮັບ (passive learner) ມາ ເປັນຜູ້ລົງມືປະຕິບັດ ແລະ ສະແຫວງຫາຄວາມຮູ້ ດ້ວຍຕົນເອງ (active learner) ນັ້ນໝາຍຄວາມວ່າ ການທີ່ຄູຜູ້ສອນຕ້ອງປັບ ປ່ຽນບົດບາດມາເປັນ “ຄູຝຶກ” ຫຼື ຜູ້ໃຫ້ຄຳປຶກສາ (facilitator) ໃນການຮຽນຂອງລູກສິດ; ສອນ ຫຼື ບັນຍາຍໃຫ້ໜ້ອຍລົງຮຽນຮູ້ ໃຫ້ຫຼາຍຂຶ້ນໃຫ້ຄວາມສຳຄັນກັບຂະບວນການຮຽນຮູ້ຜູ້ສອນຕ້ອງ ມີທັງສາດ ແລະ ສິນໃນການສອນໃຫ້ຄວາມສຳຄັນກັບຂະບວນ ການຮຽນຮູ້ຜູ້ສອນຕ້ອງມີທັງສາດ ແລະ ສິນ ໃນການສອນຄື: ຕ້ອງມີຄວາມຮູ້ດີ, ມີທັກສະ ແລະ ເທັກນິກການສອນທີ່ມີ ປະສິດທິພາບ, ມີຄວາມຮູ້ໃນຫຼັກການ ແລະ ວິທີການສອນທີ່ດີ, ຕ້ອງຮູ້ທັນ ສື່ເທັກໂນໂລຢີ ແລະ ນະວັດຕະກຳຕ່າງໆ, ມີທັກ ສະການວັດ ແລະ ປະເມີນ ຜົນການຮຽນຮູ້, ມີທັກສະການສື່ສານ ໄດ້ຢ່າງມີປະສິດທິພາບ, ຜູ້ສອນຕ້ອງມີ ຄວາມຮູ້ດີທັງດ້ານວິຊາ ການ ແລະ ວິຊາຊີບຄູ; ຄຸນລັກສະນະສຳຄັນອີກປະການໜຶ່ງຂອງ ຄູຜູ້ສອນທີ່ດີຄື ການມີປະຕິສຳພັນທີ່ດີລະຫວ່າງຄູກັບນັກຮຽນ, ຜູ້ສອນຕ້ອງມີຄວາມຮູ້ທາງຈິດຕະວິທະຍາ, ສາມາດເຂົ້າໃຈທຳມະ ຊາດຂອງຜູ້ຮຽນໃນແຕ່ລະຊ່ວງໄວ (ວິຈານ ແລະ ພານິດ, 2555)

ປັດໄຈທີ່ສົ່ງເສີມການຈັດການຮຽນການສອນການຮຽນ ຮູ້ຈະເກີດຂຶ້ນໄດ້ດີ ຕ້ອງອາໄສປັດໄຈທີ ສົ່ງເສີມໃນຫຼາຍໆດ້ານ ດັ່ງ ທີ່ (ອາພອນ ໃຈທ່ຽງ, 2553, ໜ້າ. 17-19) ໄດ້ກ່າວໄວ້ 4 ດ້ານ ດັ່ງຕໍ່ໄປນີ້:

ຜູ້ຮຽນ

1. ວຸດທິພາວະ ແມ່ນຄວາມຈະເລີນເຕີບໂຕທີ່ສູງສຸດ ໃນໄລຍະໃດໄລຍະໜຶ່ງທີ່ພ້ອມຈະກຳທຳສິ່ງໃດສິ່ງໜຶ່ງໄດ້ເໝາະ ສົມກັບ ໄວ ເຊັ່ນ: ເດັກທີ່ສາມາດຍ່າງໄດ້ໃນເວລາທີ່ຄວນຈະຍ່າງກໍ ເອີ້ນວ່າເດັກມີວຸດທິພາວະພ້ອມທີ່ຈະເດີນ.

2 ຄວາມພ້ອມ ແມ່ນສະພາບຂອງຄົນທີ່ມີວຸດທິພາວະ ລວມທັງຄວາມສົນໃຈ ແລະ ປະສົບການເດີມທີ່ຈະເຮັດໃຫ້ຮູ້ ສິ່ງ ຕ່າງໆໄດ້ດີ.

3 ປະສົບການເດີມ ຜູ້ທີ່ມີປະສົບການຫຼາຍກໍຈະເຮັດ ໃຫ້ເກີດການຮຽນຮູ້ສິ່ງຕ່າງໆໄດ້ຫຼາຍ ແລະ ດີກວ່າຜູ້ທີມີ ປະສົບ ການໜ້ອຍ. ຜູ້ຮຽນ

4 ອາຍຸ ນັກຈິດຕະວິທະຍາພົບວ່າ ຍິ່ງອາຍຸຫຼາຍຂຶ້ນ ຄວາມສາມາດໃນການຮຽນຮູ້ຍິ່ງຫຼຸດລົງ (20-35 ປີ ຮຽນຮູ້ໄດ້ດີ, ຫຼັງ 35 ປີ ການຮຽນຮູ້ຈະຫຼຸດລົງ)

5 ແຮງຈູງໃຈ ເປັນຕົວກະຕຸ້ນເຮັດໃຫ້ເກີດການຮຽນຮູ້ ໄດ້ດີ ບາງຄົນອາດຮຽນຮູ້ໄດ້ດີ ແຕ່ບໍ່ເຕັມທີ່ຕາມ ຄວາມສາມາດ ຂອງເຂົາ ຍ້ອນຂາດແຮງຈູງໃຈ.

6 ລະດັບສະຕິປັນຍາ ຜູ້ທີມີລະດັບສະຕິປັນຍາສູງຈະມີ ຄວາມສາມາດໃນການຮຽນຮູ້ໄດ້ດີກວ່າຜູ້ທີມີລະດັບ ສະຕິປັນຍາ ຕໍ່າ.

7 ອາລົມ ຜູ້ທີມີອາລົມປົກກະຕິສາມາດຮຽນຮູ້ສິ່ງຕ່າງໆ ໄດ້ດີກວ່າຜູ້ທີ່ມີອາລົມບໍ່ໝັ້ນຄົງ ຫຼື ມີຄວາມວິຕົກກັງວົນ.

8 ສະພາບຮ່າງກາຍ ຜູ້ທີ່ມີສະພາບຮ່າງກາຍປົກກະຕິ ຈະຮຽນຮູ້ສິ່ງຕ່າງໆໄດ້ດີກວ່າຜູ້ທີ່ມີຄວາມບົກຜ່ອງທາງດ້ານ ຮ່າງກາຍ ເຊັ່ນ: ຫູໜວກ, ຕາບອດ, ເປັນໄດ້, ມີໂລໄພໄຂເຈັບ ຕ່າງໆ.

ບົດຮຽນ

ບົດຮຽນມີອິດທິພົນຕໍ່ຜູ້ຮຽນ ໄດ້ແກ່:

1 ຄວາມງ່າຍຂອງບົດຮຽນ ບົດຮຽນທີ່ງ່າຍຈະຊ່ວຍໃຫ້ ເກີດການຮຽນຮູ້ໄດ້ໄວ ກວ່າບົດຮຽນທີ່ຍາກໆ.

2 ຄວາມຍາວຂອງບົດຮຽນ ບົດຮຽນທີມີຄວາມຍາວ ຫຼາຍ ຍ່ອມເຮັດໃຫ້ເກີດ ການຮຽນຮູ້ໄດ້ຊ້າກວ່າ ບົດຮຽນທີ່ມີ ຄວາມສັ້ນ ກວ່າ.

3 ຄວາມໝາຍຂອງບົດຮຽນ ບົດຮຽນທີ່ມີຄວາມ ໝ າຍ ຈະຊ່ວຍໃຫ້ເກີດການຮຽນ ຮູ້ໄດ້ດີກວ່າບົດຮຽນທີ່ບໍ່ ມີ ຄວາມໝາຍ.

ວິທີການຈັດການຮຽນ-ການສອນ ສາມາດໃຊ້ຫຼາຍວິທີ ໄດ້ແກ່:

1 ການຈັດກິດຈະກາການຮຽນ-ການສອນ ຜູ້ຮຽນຈະ ເກີດການຮຽນຮູ້ໄດ້ ແລະ ໄວ ຖ້າຢູ່ຮຽນມີສ່ວນຮ່ວມ ໃນການ ຮຽນ-ການສອນຢ່າງເໝາະສົມ.

2 ການໃຊ້ເຄື່ອງສ້າງແຮງຈູງໃຈ (incentive) ເຊັ່ນ: ການໃຫ້ລາງວັນ, ການແຂ່ງຂັນ ແລະ ອື່ນໆ ຈະຊ່ວຍ ກະຕຸ້ນໃຫ້ຜູ້ ຮຽນເກີດຄວາມຕັ້ງໃຈ ແລະ ສົນໃຈຕໍ່ການຮຽນດີຂຶ້ນ.

3 ການແນະແນວໃນການຮຽນ ຈະຊ່ວຍໃຫ້ຜູ້ຮຽນ ຮຽນໄດ້ດີຂຶ້ນ ຖ້າໄດ້ຮັບການແນະແນວທີ່ຖືກຕ້ອງເໝາະ ສົມ ເຊັ່ນ: ບໍ່ຫຼາຍ, ບໍ່ໜ້ອຍ ເພາະຈະເຮັດໃຫ້ຜູ້ຮຽນບໍ່ເປັນຕົວຂອງຕົວ ເອງ ແລະ ປະຕິບັດບໍ່ຖືກຕ້ອງໄດ້.

4 ການສົ່ງເສີມໃຫ້ຜູ້ຮຽນເກີດການຖ່າຍທອດການ ຮຽນຮູ້ ເຊັ່ນ: ການເຊື່ອມໂຍງຄວາມສຳພັນລະຫວ່າງ ປະສົບການ ເດີມກັບປະສົບການໃໝ່ (ການນຳຄວາມຮູ້ໄປໃຊ້) ຈະເຮັດ ໃຫ້ການຮຽນເກີດຄວາມຖາວອນ.

5 ໄລຍະເວລາໃນການຮຽນ ຖ້າຈັດໃຫ້ຜູ້ຮຽນໄດ້ຮຽນ ໃນຊ່ວງກ່ອນພັກກາງເວັນ ຈະຊ່ວຍໃຫ້ການຮຽນຮູ້ ໄດ້ດີ ກວ່າ ຮຽນໃນຕອນບາຍ.

6 ການຝຶກຝົນ ເມື່ອຜູ້ຮຽນໄດ້ຮຽນຮູ້ແລ້ວ ມີໂອກາດໄດ້ຝຶກຝົນ ຫຼື ປະຕິບັດເລື້ອຍໆ ຈະເຮັດໃຫ້ການຮຽນ ຮູ້ສິ່ງນັ້ນມີຄວາມໝັ້ນຄົງຖາວອນຍິ່ງຂຶ້ນ.

ສະພາບແວດລ້ອມ ສະພາບແວລ້ອມທາງການຮຽນໄດ້ແກ່:

1 ສະພາບແວດລ້ອມທາງຈິດຕະວິທະຍາ ເຊັ່ນ: ບັນຍາກາດໃນຫ້ອງ ຮຽນ, ຄວາມສຳພັນລະຫວ່າງຜູ້ກັບຜູ້ຮຽນ, ຄວາມສຳພັນລະຫວ່າງ ຜູ້ຮຽນດ້ວຍກັນ ແລະ ອື່ນໆ ຖ້າເປັນສະພາບແວດລ້ອມທີ່ດີຈະ ສົ່ງເສີມໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ດີ.

2 ສະພາບແວດລ້ອມທາງຮູບພາບ ເຊັ່ນ: ສະດານ, ໂຕະ, ຕັ່ງ, ແສງ ສະຫວ່າງ, ອຸນຫະພູມ, ຄວາມເປັນລະບຽບຮຽບຮ້ອຍໃນຫ້ອງຮຽນ ແລະ ອື່ນໆ ສະພາບແວດລ້ອມທີ່ດີຊ່ວຍໃຫ້ຜູ້ສອນສະບາຍໃຈ, ສະບາຍກາຍໃນການຮຽນ ແລະ ການຮຽນກໍຈະດີຂຶ້ນ.

ສະຫຼຸບ ການຈັດການຮຽນຮູ້ເປັນຂະບວນການສຳຄັນໃນການນຳຫຼັກສູດໄປສູ່ການປະຕິບັດ ເພື່ອໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດຕາມ ມາດຖານການຮຽນ ຫຼື ຕົວຊີ້ວັດ, ສອດຄ່ອງກັບສະຖານະຂອງຜູ້ ຮຽນ ແລະ ຄຸນລັກສະນະຕາມຈຸດປະສົງທີ່ກຳນົດໄວ້ໃນຫຼັກສູດ. ການເວົ້າວ່າ ຜູ້ຮຽນມີຄວາມສຳຄັນທີ່ສຸດ, ເປັນການຈັດກິດຈະກຳການຮຽນຮູ້, ສິ່ງແວດລ້ອມເພື່ອການຮຽນຮູ້ ແລະ ປະສົບ ການການຮຽນຮູ້ ເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ ແລະ ຜູ້ຮຽນ ສາມາດນຳຄວາມຮູ້ໄປໃຊ້ໃນຊີວິດປະຈຳວັນໄດ້; ທັງນີ້ກໍເພື່ອເປັນ ການພັດທະນາຜູ້ຮຽນໃນທຸກດ້ານເຊັ່ນ: ດ້ານຮ່າງກາຍ, ອາລົມ, ສັງຄົມ, ສະຕິປັນຍາ ເພື່ອໃຫ້ຜູ້ຮຽນຢູ່ກັບສັງຄົມໄດ້ຢ່າງມີ ຄວາມສຸກ.

### *2.3. ບົດຄົ້ນຄວ້າທີ່ກ່ຽວຂ້ອງ*

ປັດໃຈທີ່ສົ່ງຜົນຕໍ່ການອ່ານ ແລະ ການຂຽນຂອງນັກຮຽນເປັນຕົ້ນແມ່ນ ກະຊວງສຶກສາທິການ ແລະ ກິລາ ,ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາໄດ້ ສຶກສາກ່ຽວກັບ ການປະເມີນຜົນສຳເລັດດ້ານການຮຽນ ຂອງນັກຮຽນຊັ້ນປະຖົມ ປີທີ 3 ໃນສ ປ ປ ລາວ .ພົບວ່າ: ປັດໃຈທີ່ມີຄວາມສຳພັນກັບຜົນສຳເລັດດ້ານການຮຽນຂອງນັກຮຽນມີຫຼາຍປັດໃຈປະກອບມີ: 1)ປັດໃຈນຳເຂົ້າດ້ານເສດຖະກິດຄອບຄົວ ແລະ ການສະໜັບສະໜູນອື່ນໆ ຈາກພາຍນອກໂຮງຮຽນ. 2)ສະພາບເງື່ອນໄຂຂອງຫ້ອງຮຽນ ແລະ ຂະບວນການໃນການຈັດການຮຽນ-ການສອນ. 3)ປັດໃຈນຳເຂົ້າຕ່າງໆ ຂອງໂຮງຮຽນ (ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ , 2014)

Dema (2022) ໄດ້ສຶກສາປັດໃຈທີ່ມີຜົນກະທົບຕໍ່ທັກສະການຂຽນພາສາອັງກິດ. ລະດັບມັດທະຍົມຕອນປາຍຂອງພູທອນແບ່ງອອກເປັນ 2 ປັດໃຈຕົ້ນຕໍຄື: 1) ນັກຮຽນ, ເຊັ່ນ: ຄວາມຄິດເຫັນກ່ຽວກັບຄວາມສຳຄັນຂອງການຂຽນ, ແຮງຈູງໃຈ, ຄວາມຮູ້, ພຶດຕິກຳ, ຄວາມສາມາດ, ຄວາມຄິດທີ່ເຈົ້າມີຕໍ່ຕົນເອງ, ແລະອື່ນໆ, ແລະ 2). ຄູສອນເຊັ່ນ: ວິທີການສອນ , ຮູບແບບພາລະບົດບາດ, ສະພາບແວດລ້ອມສຳລັບການຂຽນ, ແຮງຈູງໃຈ, ແລະອື່ນໆ ສອດຄ່ອງ ກົ່ງລັກ ຈົບສີ (2561) ໄດ້ສຶກສາກ່ຽວກັບປັດໃຈທີ່ສົ່ງຜົນຕໍ່ການອ່ານອອກຂຽນໄດ້ຂອງນັກຮຽນປະຖົມສຶກສາປີທີ 3 ສັງກັດສຳນັກງານເຂດພື້ນທີ່ລາດສະບຸລີ ເຂດ 1.ຜົນການວິໄຈພົບວ່າ: ລະດັບປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນຊັ້ນ ປ.3 ແມ່ນຢູ່ໃນລະດັບສູງສຸດ. ເມື່ອພິຈາລະນາແຕ່ລະດ້ານ ໂດຍການຈັດລຽງຄ່າສະເລ່ຍຈາກຫຼາຍສຸດຫາຕໍ່າສຸດ, ພົບວ່າປັດໃຈຄູ (X3), ປັດໃຈບໍລິຫານ (X4), ແລະປັດໃຈນັກຮຽນ (X1) ຢູ່ໃນລະດັບຫຼາຍສຸດໃນຂະນະທີ່ປັດໃຈຄອບຄົວ (X2) ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ 2. ປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນຊັ້ນ ປ.3 ມີຄວາມໝາຍທາງສະຖິຕິ ໃນລະດັບ .01 ມີ 1 ປັດໃຈ ຄື ປັດໃຈຄອບຄົວ (X2).

ກົ່ງລັກ ຈົບສີ (2561) ພົບວ່າ ປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນປະຖົມສຶກສາ ປີທີ 3 ລາດຊະບູລີ 1 ປັດໃຈ ທີ່ໄດ້ສຶກສາ ແບ່ງອອກເປັນ 4 ດ້ານຄື: ປັດໃຈນັກຮຽນ, ປັດໃຈຄອບຄົວ ປັດໃຈຄູ ແລະ ປັດໃຈຄຸ້ມຄອງ ກຸ່ມຕົວຢ່າງທີ່ນຳໃຊ້ເຂົ້າໃນການຄົ້ນຄວ້າແມ່ນນັກຮຽນປະຖົມສຶກສາ ປີທີ 3 ການເກັບຕົວຢ່າງແບບສຸ່ມຫຼາຍຂັ້ນຕອນ. ເຄື່ອງມືເກັບກຳຂໍ້ມູນແມ່ນແບບສອບຖາມ 5 ລະດັບທີ່ມີຄວາມໜ້າເຊື່ອຖືຂອງ .94. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນລວມມີການແຈກຢາຍຄວາມຖີ່, ເປີເຊັນ, ຄ່າສະເລ່ຍ, ແລະຄ່າຜັນປ່ຽນມາດຕະຖານ, Coefficient Pearson's product momentum and regression analysis ຮູບແບບຫຼາຍທາງເລືອກໂດຍການນຳໃຊ້ຕົວແປເຂົ້າທັງໝົດ ພົບວ່າ 1) ລະດັບຂອງປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນຊັ້ນ ປ.3 ພາຍໃຕ້ ລາດບຸລີ ພື້ນທີ່ 1 ໂດຍທົ່ວໄປແມ່ນຢູ່ໃນລະດັບສູງສຸດ. ເມື່ອພິຈາລະນາແຕ່ລະດ້ານໂດຍການຈັດລຳດັບຄ່າສະເລ່ຍຈາກສູງສຸດຫາຕໍ່າສຸດ, ພົບວ່າປັດໃຈຄູ (X3), ປັດໃຈບໍລິຫານ (X4), ແລະປັດໃຈນັກຮຽນ (X1) ຢູ່ໃນລະດັບສູງສຸດຕາມລຳດັບ. ປັດໃຈຄອບຄົວ (X2) ມີມູນຄ່າສະເລ່ຍສູງ. 2. ປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນປະຖົມປີທີ3 ລາດຊະບູລີ ເຂດ 1 ໂດຍມີສະຖິຕິຢູ່ໃນລະດັບ .01 ມີ 1 ປັດໃຈຄື: ປັດໃຈຄອບຄົວ (X2).

ອາລະກອນ ທອງສະຫວ່າງ ແລະ ສີລິມົນ (2024) ສຶກສາ ແລະ ສົມທຽບປັດໃຈທີ່ສົ່ງຜົນກະທົບຕໍ່ທັກສະການຂຽນພາສາໄທ ແລະ ພາສາອັງກິດເພື່ອ ສະເໜີແນວທາງການພັດທະນາທັກສະການຂຽນພາສາໄທ ແລະ ພາສາອັງກິດ. ຜົນການວິໄຈພົບວ່າ 1. ປັດໃຈທີ່ສົ່ງຜົນກະທົບຕໍ່ທັກສະການຂຽນພາສາໄທ ແລະ ພາສາອັງກິດ ແບ່ງອອກເປັນ 1) ປັດໃຈຂອງນັກຮຽນ ໂດຍມີ 3 ປັດໃຈຍ່ອຍຄື: ຄວາມສາມາດ, ແຮງຈູງໃຈ ແລະ ທັດສະນະຄະຕິ. 2) ປັດໃຈຂອງຄູ ມີ 5 ປັດໃຈຍ່ອຍ ດັ່ງນີ້: ວິທີການຈັດການຮຽນ, ສະພາບແວດລ້ອມໃນຫ້ອງຮຽນ, ຄວາມສຳພັນຂອງຄູ-ນັກຮຽນ, ບຸກຄະລິກກະພາບ ແລະ ຫຼັກສູດ. 3) ປັດໃຈຄອບຄົວທີ່ມີ 3 ປັດໃຈຍ່ອຍດັ່ງນີ້: ຄວາມສຳພັນໃນຄອບຄົວ, ການສົ່ງເສີມການຂຽນ

ແລະ ຖານະຂອງພໍ່ແມ່ ແລະ ໃນຂະນະທີ່ Dhanya (2019) ກໍໄດ້ສຶກສາກ່ຽວກັບປັດໃຈທີ່ມີຜົນກະທົບຕໍ່ທັກສະການຂຽນພາສາອັງກິດໃນປະເທດອິນເດຍ ປັດໃຈສໍາຄັນແມ່ນຄູສອນເຊັ່ນ: ຄູເປັນແຫຼ່ງສ້າງແຮງຈູງໃຈ, ການພົວພັນລະຫວ່າງຄູກັບນັກຮຽນ, ວິທີການສິດສອນ, ບັນຍາກາດໃນຫ້ອງຮຽນທີ່ດີ, ການປະເມີນຜົນ ແລະ ຕໍານິຕິຊົມ, ການນໍາໃຊ້ເຕັກໂນໂລຊີ, ການຍ້ອງຍໍ ແລະ ອື່ນໆ ສອດຄ່ອງກັບບາງສ່ວນບົດຄົ້ນຄວ້າຂອງ Acharya (2018) ໄດ້ສະຫຼຸບປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສໍາເລັດໃນການຮຽນໃນປະເທດເນປານ ພົບວ່າປັດໃຈຕົ້ນຕໍແບ່ງອອກເປັນ 3 ສ່ວນຄື: 1. ດ້ານເພດ, ອາຍຸ, ຄວາມຄິດເຫັນກ່ຽວກັບວິຊາ, ຄວາມສາມາດ, ຄວາມຕັ້ງໃຈ ແລະ ອື່ນໆ 2. ດ້ານນັກຮຽນຄອບຄົວ, ເຊັ່ນ: ສະຖານະພາບທາງດ້ານເສດຖະກິດ-ສັງຄົມ, ແລະອື່ນໆ 3. ຄູສອນເຊັ່ນ: ຄຸນລັກສະນະ, ຫຼັກສູດ, ກິດຈະກໍາການຮຽນຮູ້, ປັດໃຈອື່ນໆ.

ໃນແງ່ດຽວກັນກັບ ອ້າງໃນ ກິ່ງລັກ ຈິບສີ (2561) ລຸ່ງລັດ ບຸນເຮືອງ (2553) ໄດ້ສຶກສາ ປັດໃຈຄວາມສາມາດໃນການອ່ານຂອງນັກຮຽນປະຖົມປີທີ 2 ພົບວ່າ ປັດໃຈ ດ້ານຄູຜູ້ສອນ, ການບໍລິຫານ , ນັກຮຽນ, ຄອບຄົວ ເປັນປັດໃຈ ທີ່ສາມາດຈໍາແນກກຸ່ມ ຄວາມສາມາດ ການອ່ານ ຂອງນັກຮຽນຊັ້ນປະຖົມສຶກສາປີທີ 2 ໄດ້ ແລະ (ລຸ່ງລັດ ບຸນເຮືອງ, 2533). ພິມປະພອນ (2552) ສຶກສາດ້ານປັດໃຈ ຕໍ່ຄວາມສໍາເລັດທາງການຮຽນພາສາໄທ ຂອງນັກຮຽນປະຖົມສຶກສາປີທີ 6 ພົບວ່າ: ປັດໃຈ ດ້ານນັກຮຽນ ມີຄວາມສໍາພັນກັບຜົນສໍາເລັດທາງການຮຽນພາສາໄທກັບນັກຮຽນຢ່າງມີວິໄນສໍາຄັນທາງສະຖິຕິ . 01 ຄື: ຄວາມຖະໜັດທາງການຮຽນ, ພາສາ ແລະ ຄວາມຮູ້ພື້ນຖານເດີມ ,ແຮງຈູງໃຈ.

ດັ່ງນັ້ນ, ຜູ້ຄົ້ນຄວ້າຈຶ່ງສົນໃຈທີ່ຈະສຶກສາ ປັດໃຈທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນຂອງນັກຮຽນປະຖົມສຶກສາ ປີທີ 3 ຈໍານວນ 3 ດ້ານໄດ້ແກ່: ປັດໃຈດ້ານຜູ້ຮຽນ, ປັດໃຈດ້ານຄູສອນ, ປັດໃຈດ້ານການບໍລິຫານ ເພື່ອເປັນແນວທາງໃນການພັດທະນາຜູ້ຮຽນໃຫ້ມີຄວາມພ້ອມ ແລະ ຄວາມສາມາດໃນການສຶກສາໃນລະດັບຊັ້ນທີ່ສູງຂຶ້ນ ຕະຫຼອດຈົນເປັນແນວທາງໃນການແກ້ບັນຫາການອ່ານອອກ ຂຽນໄດ້ໃຫ້ດີຍິ່ງຂຶ້ນ.

## 3. ວິທີດໍາເນີນການຄົ້ນຄວ້າ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ຄື: ຄູ ແລະ ນັກຮຽນ ຈໍານວນ 1340 ຄົນ ໃນ 61 ໂຮງຮຽນ ຜູ້ວິໄຈໄດ້ນໍາໃຊ້ຕາຕະລາງການສຸ່ມທັງໝົດ 2 ຄັ້ງຄື ຄັ້ງທີ 1 ກໍານົດກຸ່ມຕົວຢ່າງແບບໃຊ້ຄ່າກະຕວງແຕ່ຫຼາຍ ຫາ ໜ້ອຍຈາກປະຊາກອນ 1340 ໂດຍນໍາໃຊ້ ສູດຄໍານວນຂອງ Kerjcie and Morgan (1970: 608) ກຸ່ມຕົວຢ່າງຍັງເຫຼືອ 297 ກຸ່ມຕົວຢ່າງທີ່ໄດ້ມີຄູສອນຊັ້ນ ປ 3 ທັງໝົດ ຈໍານວນ 56 ຄົນ , ຄັ້ງທີ2 ແມ່ນສຸ່ມໃນຮູບແບບເຈາະຈົງດ້ວຍການແບ່ງກຸ່ມ (Cluster Random Sampling) ຈາກນັກຮຽນ 241 ຄົນ ໄດ້ຈໍານວນຕົວຈິງ 137 ຄົນ. ລວມຈໍານວນຄູ ແລະ ນັກຮຽນ ມີຈໍານວນ 193 ຄົນ.

*3.2. ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າເກັບຂໍ້ມູນ ມີ 2 ຊະນິດຄື: 1) ແບບທົດສອບຄວາມຮູ້ຕາມມາດຕາຖານຂອງຊັ້ນຮຽນລວມມີ 6 ຂໍ້ຄື: ການອ່ານ ແລະ ຂຽນສະກົດຄໍາ, ການອ່ານແລະເລືອກຂຽນຄໍາຕອບທີ່ຖືກຕ້ອງ, ການອ່ານ ແລະ ຈັດລຽງຄໍາສັບ, ວະລີ ໃຫ້ເປັນປະໂຫຍກ, ການອ່ານ ແລະ ຕື່ມຄໍາສັບຫຼືວະລີໃສ່ບ່ອນຫວ່າງ, ການແຕ່ງປະໂຫຍກ ຂໍ້ຄວາມຈາກຮູບພາບ, ການອ່ານ ແລະ ຕອບຄໍາຖາມ ແລ້ວຂຽນຄໍາຕອບ.ຈໍານວນແບບທົດສອບ 137 ສະບັບ ວັດແທກຕາມເກນໃຫ້ຄະແນນແບບຮູບຣິກ 3 ລະດັບ. 2) ແບບສອບຖາມສໍາລັບຄູສອນທີ່ຖາມເຖິງລະດັບປັດໃຈທີ່ມີຜົນຕໍ່ການອ່ານອອກຂຽນເປັນຂອງນັກຮຽນຊັ້ນ ປ. 3 ຈໍານວນ 56 ສະບັບ ປະກອບມີ 3 ພາກສ່ວນຄື :

ສ່ວນທີ 1 ຂໍ້ມູນພື້ນຖານ ຂອງຜູ້ຕອບແບບສອບຖາມ ປະກອບມີ ເພດ ອາຍຸ , ວຸດທິການສຶກສາ, ຕໍາແໜ່ງ, ປະສົບການໃນການສອນ

ສ່ວນທີ 2 ສອບຖາມຄວາມຄິດເຫັນດ້ານ ຄູສອນ ປະກອບມີທັກສະ ແລະ ເຕັກນິກການສອນ ດ້ານຄວາມຮູ້ພື້ນຖານ, ສະພາບແວດລ້ອມຂອງຫ້ອງຮຽນ

ສ່ວນທີ 3 ຄວາມຄິດເຫັນດ້ານການບໍລິຫານ ປະກອບມີການນໍາພາແນວຄິດການເມືອງ, ຄວາມຮູ້ປະສົບການ, ການສົ່ງເສີມຫຼັກສູດ , ການປະກັນຄຸນະພາບການສຶກສາ , ການຮ່ວມມືກັບຊຸມຊົນ.

ຜູ້ຄົ້ນຄວ້າໄດ້ນໍາເອົາເຄື່ອງມືໄປທົດລອງໃຊ້ກັບກຸ່ມທີ່ບໍ່ແມ່ນເປົ້າໝາຍກ່ອນການນໍາເຄື່ອງມືໄປເກັບຕົວຈິງຈາກກຸ່ມຕົວຢ່າງແມ່ນມີຄວາມຈໍາເປັນຕ້ອງວິເຄາະຄວາມໜ້າເຊື່ອຖື (Reliability Analysis). Field (2009) ອະທິບາຍວ່າ Reliability ເປັນຕົວບົ່ງຊີ້ການກວດເຄື່ອງມືຂອງ ການວິໄຈເຊິ່ງສະທ້ອນເຖິງໂຕງທີ່ກໍາລັງວັດມຄວາມສະໝໍ່າສະເໝີໂດຍ ຜົນຮັບສາມາດຕີລາຄາຜ່ານຄ່າອານຟາ (α) ຂອງຄຣອນບາດ (Cronbach's Alpha (α) values). George ແລະ Mallery (2003) ໃຫ້ກົດທົ່ວໄປດັ່ງຕໍ່ໄປນີ້: >0.90=ຍອດຢ້ຽມຽມ (Excellent), >0.80=ດີ (Good), >0.70=ຍອມຮັບໄດ້ (Acceptable), >0.60=ສົງໃສ (Questionable), >0.50= ຂີ້ຮ້າຍ (Poor), ແລະ <0.50=ຍອມຮັບໄດ້ (Unacceptable).

**ຕາຕະລາງ**1 ສະຫຼຸບຄ່າ Reliability Analysis ຂອງປັດໃຈທີ່ສົ່ງຜົນຕໍ່ການອ່ານ ແລະ ການຂຽນ

| ອົງປະກອບ | Alpha |
|---|---|
| ດ້ານຜູ້ຮຽນ | 0.81 |
| ດ້ານຄູສອນ | 0.82 |
| ດ້ານການບໍລິຫານ | 0.86 |

*3.3. ວິທີເກັບຂໍ້ມູນ*

ໃນການດຳເນີນການຄົ້ນຄວ້າຄັ້ງນີ້ ໄດ້ກຳນົດວິທີໃນການເກັບຮວບລວມ ໄວ້ 2 ວິທີຄື: 1) ແບບທົດສອບ ແມ່ນໃຊ້ທົດສອບການອ່ານ ແລະ ການຂຽນນັກຮຽນ ຂັ້ນ ປ.3, 2) ແບບສອບຖາມລະດັບ ປັດໄຈທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນຂອງນັກຮຽນ ແມ່ນໃຊ້ສອບຖາມຄູສອນຂັ້ນ ປ. 3 ເຊິ່ງໄດ້ດຳເນີນຕາມຂັ້ນຕອນການເກັບຂໍ້ມູນຄື: ໄດ້ກະກຽມແບບທົດສອບ,ແບບສອບຖາມສະບັບສົມບູນຕາມຈຳນວນກຸ່ມຕົວຢ່າງຄົບຖ້ວນ ຈາກນັ້ນ, ຂຽນໃບສະເໜີຜ່ານຄະນະສຶກສາສາດມະຫາວິທະຍາໄລຈຳປາສັກ ແລ້ວນຳສະເໜີຕໍ່ຫ້ອງການສຶກສາທິການ ແລະ ກິລາເມືອງ ສຸຂຸມາ ເພື່ອຂໍອະນຸຍາດເກັບຂໍ້ມູນນຳພະນັກງານຄູ ແລະ ນັກຮຽນທີ່ເປັນກຸ່ມຕົວຢ່າງໂດຍແບ່ງອອກເປັນ 2 ໄລຍະຄື: ໄລຍະທີ 1) ເລີ່ມແຕ່ວັນທີ: 6 -10 ມັງກອນ 2025, 2)ໄລຍະທີ 2 ເລີ່ມແຕ່ວັນທີ 27-31 ມັງກອນ 2025. ຜູ້ວິໄຈນຳເອົາແບບສອບຖາມ, ແບບທົດສອບລົງຢາຍໃຫ້ຄູກຸ່ມຕົວຢ່າງໃນແຕ່ລະໂຮງຮຽນທີ່ເປັນເປົ້າໝາຍ. ຫຼັງຈາກ ຄູ ແລະ ນັກຮຽນຕອບສຳເລັດແລ້ວຈຶ່ງລວບລວມຂໍ້ມູນເພື່ອນຳມາວິເຄາະ.

*3.4. ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄວ້າ*

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນແມ່ນວິເຄາະ ດ້ວຍສະຖິຕິພັນລະນາ (Descriptive Statistics) ການຄົ້ນຄວ້ານີ້ສະຖິຕິພັນລະນາ ແມ່ນໄດ້ຖືກນຳໃຊ້ເຂົ້າໃນການວັດແທກອັດຕາສ່ວນຮ້ອຍ (Percentage) ແລະ ຄວາມຖີ່ (Frequency) ຂອງກຸ່ມຕົວຢ່າງທີ່ຕອບແບບສອບຖາມປະກອບມີ: ເພດ, ອາຍຸ, ສະຖານະພາບ, ປະສົບການໃນການເຮັດວຽກ, ລະດັບການສຶກສາການສຶກສາ. ໃນການຄົ້ນຄວ້າ ເພື່ອໃຫ້ບັນລຸຕາມຈຸດປະສົງທີ 1 ວິເຄາະຂໍ້ມູນຜົນຄະແນນຂອງນັກຮຽນໄດ້ຈາກແບບທົດສອບຂອງກຸ່ມຕົວຢ່າງໃຊ້ ສະຖິຕິ: ຊອກຫາອັດຕາສ່ວນຮ້ອຍ (Percentage) , ຄວາມຖີ່ ເພື່ອອະທິບາຍລັກສະນະ ສະເພາະຂອງຂໍ້ມູນແຕ່ລະຕົວປ່ຽນ.ໃນການແປຜົນຄັ້ງນີ້ໄດ້ອີງຕາມເກນເກນໃຫ້ຄະແນນຂອງກະຊວງສຶກສາທິການ ແລະ ກິລາ (ເອກະສານ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ : 2013, ໜ້າ 18) ເຊິ່ງມີເກນດັ່ງນີ້:

ແປຜົນຄະແນນແບບທົດສອບ.

ຄະແນນ 1 - 4 ໝາຍເຖິງຜົນການຮຽນຢູ່ໃນລະດັບອ່ອນ
ຄະແນນ 5 – 6 ໝາຍເຖິງຜົນການຮຽນຢູ່ໃນລະດັບປານກາງ
ຄະແນນ 7 - 8 ໝາຍເຖິງຜົນການຮຽນຢູ່ໃນລະດັບດີ
ຄະແນນ 9 -10 ໝາຍເຖິງຜົນການຮຽນຢູ່ໃນລະດັບດີຫຼາຍ

ຈຸດປະສົງທີ 2 ວິເຄາະຂໍ້ມູນລະດັບປັດໄຈທີ່ໄດ້ຈາກແບບສອບຖາມຂອງຄູໃຊ້ສະຖິຕິ ຊອກຫາຄ່າສະເລ່ຍ Mean ຄ່າຜັນປ່ຽນມາດຕາຖານ SD (ປະສາດ ເນືອງສະເຫຼີມ, 2556:224-225)

ເກນທີ່ໃຊ້ໃນການໃນການຈັດຊ່ວງລະຫວ່າງແຕ່ລະຂັ້ນ ແມ່ນນຳໃຊ້ມາດວັດຂອງແບບ ລິເຄີຣທ

| ຄ່າສະເລ່ຍ | ການແປຄວາມໝາຍ |
|---|---|
| 4.21 – 5.00 | ມີຄວາມຄິດເຫັນຫຼາຍສຸດ |
| 3.41 – 4.20 | ມີຄວາມຄິດເຫັນຫຼາຍ |
| 2.61 – 3.40 | ມີຄວາມຄິດເຫັນປານກາງ |
| 1.81 – 2.60 | ມີຄວາມຄິດເຫັນໜ້ອຍ |
| 1.00 – 1.80 | ມີຄວາມຄິດເຫັນໜ້ອຍສຸດ |

*3.2 ວິທີການວິເຄາະຂໍ້ມູນ*

ຜູ້ຄົ້ນຄວ້າໄດ້ນຳໃຊ້ໂປແກຣມສຳເລັດຮູບ SPSS (Analy Descriptive Statistics Frequencies & Analy Compare Means)ໃນການການວິເຄາະຂໍ້ມູນຂອງແບບທົດສອບ ແລະ ແບບສອບຖາມ ຕາມຂັ້ນຕອນລຸ່ມນີ້:

1) ແບບທົດສອບ ຊອກຫາຄວາມຖີ່ ແລະ ສ່ວນຮ້ອຍຂອງຄະແນນໃນແຕ່ລະຂໍ້
2) ແບບສອບຖາມ ຊອກຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານ
3) ປຽບທຽບຜົນຂອງຄ່າຄະແນນຕາມລະດັບມາດຕະຖານທີ່ຕັ້ງໄວ້.

## 4. ຜົນການຄົ້ນຄວ້າ

*4.1. ຜົນການວິເຄາະຂໍ້ມູນຈາກແບບທົດສອບຂອງນັກຮຽນ*

ເພື່ອຕອບສະໜອງຈຸດປະສົງທີ 1 ເພື່ອສຶກສາຜົນການອ່ານອອກຂຽນເປັນຂອງ ປະຖົມສຶກສາ ຂັ້ນ ປ 3.ໂຮງຮຽນປະຖົມເມືອງ ສຸຂຸມາ ແຂວງ ຈຳປາສັກ.ສາມາດສັງລວມໄດ້ດັ່ງນີ້:

**ຕາຕະລາງ 2.** ສັງລວມລະດັບຄະແນນທົດສອບການອ່ານອອກຂຽນເປັນຂອງນັກຮຽນທັງໝົດສະບັບ

| ຂໍ້ທີ / ຄະແນນ | 1 | 2 | 3 | 4 | 5 | 6 | ລວມ | ສ່ວນຮ້ອຍ | ແປຜົນ |
|---|---|---|---|---|---|---|---|---|---|
| 1-4 | 32.85 | 18.98 | 85.67 | 69.34 | 94.89 | 83.21 | 384.94 | 64.15 | ອ່ອນ |
| 5-6 | 0 | 0 | 2.19 | 0 | 0 | 1.46 | 3.65 | 0.60 | ປານກາງ |
| 7-8 | 58.39 | 29.20 | 12.41 | 13.14 | 0.73 | 11.68 | 125.55 | 20,92 | ດີ |
| 9-10 | 8.76 | 51.82 | 0.73 | 17.52 | 4.37 | 3.68 | 86.88 | 14.48 | ດີຫຼາຍ |

ຈາກຕາຕະລາງ 2. ຈາກການປະເມີນ ແບບທົດສອບນັກຮຽນທັງໝົດສະບັບ ເຫັນວ່າໂດຍລວມແມ່ນ ຢູ່ໃນລະດັບອ່ອນ ເຊິ່ງມີຄະແນນລະຫວ່າງ 1 – 4 ກວມເອົາ 64.15% ຈັດໃນລະດັບອ່ອນໃນນັ້ນເມື່ອພິຈາລະນາເປັນລາຍຂໍ້ເຫັນໄດ້ວ່າ: ນັກຮຽນມີບັນຫາແຕ່ງປະໂຫຍກຕາມຮູບພາບ ກວມເອົາເປີເຊັນສູງສຸດເທົ່າກັບ 94.89% ຮອງລົງມາ ແມ່ນຄະແນນ 7-8 ມີພຽງ 20.92% ຈັດໃນລະດັບດີ ແມ່ນນັກຮຽນສາມາດອ່ານ ແລະ ຂຽນສະກົດຄຳໄດ້ກວມເອົາ 58.39% ຖັດມາ, ຄະແນນລະຫວ່າງ 9-10ມີ 14.48% ຈັດໃນລະດັບດີຫຼາຍແມ່ນການອ່ານ ແລະ ເລືອກຂຽນຄຳຕອບທີ່ຖືກຕ້ອງໄດ້ ແລະ ເປີເຊັນຕ່ຳສຸດແມ່ນ ຄະແນນລະຫວ່າງ 5-6 ກວມເອົາ 0.60% ຈັດໃນລະດັບປານກາງ ແມ່ນການອ່ານຈັດລຽງຄຳສັບ, ອະລິໃຫ້ເປັນປະໂຫຍກ.

*4.2. ຜົນການວິເຄາະຂໍ້ມູນຈາກແບບສອບຖາມສໍາລັບຄູກ່ຽວກັບປັດໃຈທີ່ສົ່ງຜົນຕໍ່ການອ່ານອອກຂຽນເປັນຂອງນັກຮຽນ*

ເພື່ອຕອບສະໜອງຈຸດປະສົງທີ 2 ສຶກສາລະດັບປັດໃຈທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈໍາປາສັກ. ສາມາດສັງລວມໄດ້ດັ່ງນີ້:

**ຕາຕະລາງ 3** ຜົນການວິເຄາະຂໍ້ມູນລະດັບປັດໃຈລວມແຕ່ລະດ້ານ

| ລໍາດັບ | ປັດໃຈທີ່ສົ່ງຜົນຕໍ່ການອ່ານອອກຂຽນເປັນ | $\bar{X}$ | S.D | ລະດັບ |
|---|---|---|---|---|
| 1 | ດ້ານຜູ້ຮຽນ | 3.58 | 0.41 | ຫຼາຍ |
| 2 | ດ້ານຄູສອນ | 3.87 | 0.32 | ຫຼາຍ |
| 3 | ດ້ານການບໍລິຫານ | 3.57 | 0.33 | ຫຼາຍ |
| **ລວມ** | | **3.67** | **0.27** | **ຫຼາຍ** |

ຈາກຕາຕະລາງ 3 ຜົນການວິເຄາະຂໍ້ມູນລວມແຕ່ລະດ້ານເຫັນວ່າຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ ( $\bar{X}$ = 3.67 S.D = 0.27) ໃນນັ້ນມີຄວາມຄິດເຫັນຫຼາຍກວ່າໝູ່ແມ່ນ ດ້ານຄູສອນມີຄ່າສະເລ່ຍ ( $\bar{X}$ = 3.87 S.D = 0.32) ຈັດໃນລະດັບຫຼາຍ, ຮອງລົງມາແມ່ນ ດ້ານຜູ້ຮຽນມີຄ່າສະເລ່ຍ ( $\bar{X}$ = 3.58 S.D = 0.41) ຈັດໃນລະດັບຫຼາຍ ແລະ ມີຄວາມຄິດເຫັນໜ້ອຍກວ່າໝູ່ແມ່ນດ້ານການບໍລິຫານ ມີຄ່າສະເລ່ຍ ( $\bar{X}$ = 3.57 S.D = 0.33) ຈັດໃນລະດັບຫຼາຍ.

4.3. *ຂໍ້ມູນການສະເໜີຂອງຜູ້ຕອບແບບສອບຖາມ*

ເພື່ອຕອບສະໜອງຈຸດປະສົງທີ 3 ສຶກສາແນວທາງໃນການພັດທະນາການອ່ານ, ການຂຽນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈໍາປາສັກ ຜູ້ຄົ້ນຄວ້າໄດ້ສັງລວມຂໍ້ມູນຕາມການເໜີຂອງຄູມີດີ:

1) ຄູມີຄວາມຕ້ອງການຄ້ອມພິວເຕີເຂົ້າໃນການຮຽນການສອນ
2) ຄູມີຄວາມຕ້ອງການອຸປະກອນເພື່ອປະກອບໃສ່ຫ້ອງສະໝຸດຫຼືຫ້ອງອ່ານລວມ
3) ຄູສະເໜີໃຫ້ມີການນໍາພາການພັດທະນາວຽກງານການສິດສອນ ໃຫ້ແທດເໝາະກັບການສຶກສາໃນປັດຈຸບັນ.

## 5. ອະພິປາຍຜົນ

ຜົນການອ່ານອອກຂຽນເປັນຂອງ ປະຖົມສຶກສາ ຂັ້ນ ປ 3.ໂຮງຮຽນປະຖົມເມືອງ ສຸຂຸມາ ແຂວງ ຈໍາປາສັກ ສົກຮຽນ 2023-2024 ພົບວ່າ: ຜົນການຮຽນໂດຍລວມຢູ່ໃນລະດັບອ່ອນກວມເອົາ 64.15% ສະແດງວ່ານັກຮຽນຂັ້ນປ. 3 ມີບັນຫາໃນການອ່ານ ແລະ ຂຽນເປັນຕົ້ນແມ່ນ ການແຕ່ງປະໂຫຍກ , ການຈັດລຽງຄໍາສັບໃຫ້ເປັນວະລີ ຫຼື ປະໂຫຍກ, ການອ່ານ ແລະ ຕອບຄໍາຖາມ ແລ້ວຂຽນຄໍາຕອບ, ການອ່ານ ແລະ ຕື່ມຄໍາສັບຫຼືວະລີໃສ່ບ່ອນຫວ່າງເຫັນວ່າ ເປີເຊັນສູງ ໝາຍຄວາມວ່າຜົນກາຜົນການຮຽນຕໍ່າ ທີ່ຈັດໃນລະດັບອ່ອນ) ສອດຄ່ອງຜົນການປະເມີນບາງສ່ວນກ່ຽວກັບ ການຮຽນພາສາລາວ ຂອງ ASLO III ໄດ້ສະແດງໃຫ້ເຫັນວ່າ ນັກຮຽນຊັ້ນປະຖົມມີລະດັບຄວາມຮູ້ດ້ານພາສາລາວຍັງຕໍ່າ, ນັກຮຽນສ່ວນຫຼາຍບໍ່ສາມາດອ່ານຂໍ້ຄວາມງ່າຍໆ ແລະ ຈັບໃຈຄວາມໃນສິ່ງທີ່ໄດ້ອ່ານນັ້ນໄດ້ ຈົນກວ່າຮອດຊ່ວງທ້າຍ ຂອງຊັ້ນປະຖົມສຶກສາ. ນັກຮຽນ ປ.3 ມີ 32% ທີ່ອ່ານບໍ່ໄດ້, 25% ອ່ານໄດ້ແຕ່ບໍ່ເຂົ້າໃຈ, 34% ອ່ານໄດ້ເຂົ້າໃຈບາງຄໍາ, ມີພຽງ 8% ທີ່ອ່ານໄດ້ດີ ແລະ ເຂົ້າໃຈ. (ກະຊວງສຶກສາທິການ ແລະ ກິລາ, 2014) ແລະ ສອດຄ່ອງກັບຜົນການຄົ້ນຄວ້າບາງສ່ວນຂອງ ປໍລະເມກ ກິ່ນຫອມ (2021) ໄດ້ສຶກສາກ່ຽວກັບ ການພັດທະນາຊຸດກິດຈະກໍາການຮຽນການສອນບູລະນາການເພື່ອສົ່ງເສີມທັກສະການອ່ານຂຽນໄດ້ຂອງນັກຮຽນລະດັບປະຖົມສຶກສາປີທີ 1 - 4. ຜົນການວິໄຈພົບວ່າ:1)ຜົນການອ່ານອອກຂຽນໄດ້ຂອງນັກຮຽນພາບລວມຍັງຕໍ່າກວ່າເກນມີສາເຫດມາຈາກ ໂຮງຮຽນມີທີ່ຕັ້ງຢູ່ເຂດພື້ນທີ່ຫ່າງໄກ,ຜູ້ບໍລິຫານແລະຄູຕ້ອງການພັດທະນາຜົນສໍາເລັດທາງການຮຽນຂອງນັກຮຽນ.

ການສຶກສາຄົ້ນຄວ້າ ປັດໃຈທີ່ສົ່ງຜົນຕໍ່ ການອ່ານອອກຂຽນເປັນ ຂອງນັກຮຽນປະຖົມສຶກສາຂັ້ນ ປ.3 ໂຮງຮຽນປະຖົມເມືອງ ສຸຂຸມາ ແຂວງ ຈໍາປາສັກ ສົກຮຽນ 2024-2025 ໂດຍພາບລວມ ພົບວ່າ: ລະດັບປັດໃຈທີ່ສົ່ງຜົນຕໍ່ການອອກ ຂຽນເປັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ ( $\bar{X}$ = 3.67 S.D = 0.27) ໃນນັ້ນອີງຕາມຜົນການວິເຄາະຂໍ້ມູນສາມາດຈັດລໍາດັບຈາກຄ່າສະເລ່ຍສູງສຸດຫາຕໍ່າສຸດຄື ປັດໃຈດ້ານຄູສອນ, ດ້ານຜູ້ຮຽນ ແລະ ຕໍ່າສຸດແມ່ນປັດໃຈດ້ານການບໍລິຫານ. ສອດຄ່ອງກັບຜົນການຄົ້ນຄວ້າບາງສ່ວນ ກົ່ງລັດ ຈິບສີ (2018). ໄດ້ສຶກສາກ່ຽວກັບ ປັດໃຈທີ່ສົ່ງຜົນຕໍ່ການອ່ານອອກຂຽນໄດ້ຂອງນັກຮຽນປະຖົມສຶກສາປີທີ 3 ສັງກັດສໍານັກງານເຂດພື້ນທີ່ລາດສະບູລີ ເຂດ 1.ຜົນການວິໄຈພົບວ່າ: 1. ລະດັບປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການອ່ານ ແລະ ຂຽນຂອງນັກຮຽນຊັ້ນ ປ.3 ແມ່ນຢູ່ໃນລະດັບຫຼາຍສຸດ. ເມື່ອການຈັດລຽງຄ່າສະເລ່ຍຈາກຫຼາຍສຸດຫາຕໍ່າສຸດ, ພົບວ່າປັດໃຈຄູ , ນັກຮຽນ ແລະ ປັດໃຈບໍລິຫານ ມີຄວາມໝາຍທາງສະຖິຕິ ໃນລະດັບ .01. ສອດຄ່ອງກັບຜົນວິໄຈ Acharya (2018) ໄດ້ສະຫຼຸບປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມສໍາເລັດໃນການຮຽນໃນປະເທດເນປານ ພົບວ່າ: ປັດໃຈຕົ້ນຕໍແບ່ງອອກເປັນ 3 ສ່ວນຄື: 1. ດ້ານເພດ, ອາຍຸ, ຄວາມຄິດເຫັນກ່ຽວກັບວິຊາ, ຄວາມສາມາດ, ຄວາມຕັ້ງໃຈ ແລະ ອື່ນໆ 2. ດ້ານນັກຮຽນ. ຄອບຄົວ, ເຊັ່ນ: ສະຖານະພາບທາງດ້ານເສດຖະກິດ-ສັງຄົມ, ແລະອື່ນໆ 3. ຄູສອນເຊັ່ນ: ຄຸນລັກສະນະ, ຫຼັກສູດ, ກິດຈະກໍາການຮຽນຮູ້, ປັດໃຈອື່ນໆທີ່ກ່ຽວຂ້ອງກັບໂຮງຮຽນ, ແລະອື່ນໆ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າບາງສ່ວນຂອງ Dhanya & Alamelu (2019) ໄດ້ສຶກສາກ່ຽວກັບປັດໃຈທີ່ມີຜົນກະທົບຕໍ່ທັກສະການຂຽນພາສາອັງກິດໃນປະເທດອິນເດຍ ປັດໃຈສໍາຄັນແມ່ນຄູສອນເຊັ່ນ: ຄູເປັນແຫຼ່ງສ້າງແຮງຈູງໃຈ, ການພົວພັນລະຫວ່າງຄູກັບນັກຮຽນ, ວິທີການສິດສອນ, ບັນຍາກາດໃນຫ້ອງຮຽນທີ່ດີ, ການປະເມີນຜົນ ແລະ ຕໍານິຕິຊົມ, ການນໍາໃຊ້ເຕັກໂນໂລຊີ, ການຍ້ອງຍໍ ແລະ ອື່ນໆ. ສອດຄ່ອງກັບຜົນການຄົ້ນຄວ້າ Dema (2022) ໄດ້ສຶກສາກ່ຽວກັບປັດໃຈທີ່ມີຜົນກະທົບຕໍ່ທັກ

ສະການຂຽນພາສາອັງກິດ ລະດັບມັດທະຍົມຕອນປາຍ ແບ່ງອອກເປັນ 2 ປັດໄຈຕົ້ນຕໍຄື: 1). ນັກຮຽນ, ເຊັ່ນ: ຄວາມຄິດເຫັນກ່ຽວກັບຄວາມສໍາຄັນຂອງການຂຽນ, ແຮງຈູງໃຈ, ຄວາມຮູ້, ພຶດຕິກໍາ, ຄວາມສາມາດ, ຄວາມຄິດທີ່ເຈົ້າມີຕໍ່ຕົນເອງ, ແລະອື່ນໆ, ແລະ 2). ຄູສອນເຊັ່ນ: ວິທີການສອນ , ຮູບແບບພາລະບົດບາດ, ສະພາບແວດລ້ອມສໍາລັບການຂຽນ, ແຮງຈູງໃຈ, ແລະອື່ນໆ ການຄົ້ນຄວ້ານີ້ເກັບກໍາແບບສອບຖາມ. ຈາກຈໍານວນນັກຮຽນທັງໝົດ 171 ຄົນ, ໄດ້ສໍາພາດນັກຮຽນ 2 ກຸ່ມ ແລະ ຄູສໍາພາດ 5 ຄົນ ແລະ ຄູຄວນໄດ້ຮັບການພັດທະນາວິຊາຊີບດ້ານການຂຽນໂຮງຮຽນແລະຄູຄວນໃຫ້ເວລາທີ່ເໝາະສົມກັບນັກຮຽນເພື່ອພັດທະນາທັກສະການຂຽນພາສາອັງກິດ. ສອດຄ່ອງ ອາພອນ ໃຈທ່ຽງ (2553, ໜ້າ. 17-19) ກ່າວວ່າ: ປັດໄຈທີ່ສົ່ງເສີມການຈັດການຮຽນການສອນ ມີ 4 ດ້ານຄື: (1) ດ້ານຜູ້ຮຽນປະກອບມີວຸດທິພາວະ,ຄວາມພ້ອມ, ປະສົບການເດີມ, ອາຍຸ, ແຮງຈູງໃຈ, ລະດັບສະຕິປັນຍາ, ອາລົມ,ສະພາບຮ່າງກາຍ. (2) ບົດຮຽນປະກອບມີ:ຄວາມງ່າຍຂອງບົດຮຽນ, ຄວາມຍາວຂອງບົດຮຽນ, ຄວາມໝາຍຂອງບົດຮຽນ, (3) ວິທີຈັດການຮຽນການສອນ ເຊັ່ນ: ການຈັດກິດຈະກໍາ, ການສ້າງເຄື່ອງມືຈູງໃຈ, ການແນະແນວໃນການຮຽນ, ການສົ່ງເສີມໃຫ້ເກີດຄວາມຮູ້, ໄລຍະເວລາໃນການຮຽນ,ການຝຶກຝົນ. (4) ສະພາບແວດລ້ອມທາງຈິດວິທະຍາ ເຊັ່ນ: ບັນຍາກາດໃນຫ້ອງ ຮຽນ, ຄວາມສໍາພັນລະຫວ່າງຜູ້ກັບຜູ້ຮຽນ, ຄວາມສໍາພັນລະຫວ່າງ ຜູ້ຮຽນດ້ວຍກັນ ແລະ ອື່ນໆ ຖ້າເປັນສະພາບແວດລ້ອມທີ່ດີຈະ ສົ່ງເສີມໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ດີ ແລະ ສະພາບແວດລ້ອມທາງຮູບພາບ ເຊັ່ນ: ສະດານ, ໂຕະ, ຕັ່ງ, ແສງ ສະຫວ່າງ, ອຸນຫະພູມ, ຄວາມເປັນລະບຽບຮຽບຮ້ອຍໃນຫ້ອງຮຽນ ແລະ ອື່ນໆ ສະພາບແວດລ້ອມທີ່ດີຊ່ວຍໃຫ້ຜູ້ສອນສະບາຍໃຈ, ສະບາຍກາຍໃນການຮຽນ ແລະ ຜົນການຮຽນກໍຈະດີຂຶ້ນ.

### 6. ສະຫຼຸບຜົນ

ການສຶກສາຄັ້ງນີ້ມີຈຸດປະສົງ 1) ເພື່ອສຶກສາຜົນການອ່ານອອກຂຽນເປັນຂອງ ປະຖົມສຶກສາ ຂັ້ນ ປ. 3. 2) ສຶກສາລະດັບປັດໄຈທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈໍາປາສັກ, 3) ເພື່ອສຶກສາແນວທາງໃນການພັດທະນາການອ່ານ, ການຂຽນຂອງນັກຮຽນປະຖົມສຶກສາ ຂັ້ນ ປ 3 ເມືອງ ສຸຂຸມາ ແຂວງ ຈໍາປາສັກ. ກຸ່ມທົດລອງທີ່ໃຊ້ຄັ້ງນີ້ ແມ່ນຄູສອນ ແລະ ນັກຮຽນປະຖົມຂັ້ນ ປ.3 ເມືອງມສຸຂຸມາແຂວງ ຈໍາປາສັກທີ່ໄດ້ຮຽນໃນພາກຮຽນທີ 2 ສົກຮຽນ 2024-2025. ຜົນການຄົ້ນຄວ້າສະຫຼຸບໄດ້ວ່າ ນັກຮຽນມີຜົນການຮຽນຢູ່ໃນລະດັບອ່ອນກວມເອົາ 64.15% ສາເຫດຫຼັກມາຈາກນັກຮຽນບໍ່ສາມາດແຕ່ງປະໂຫຍກໄດ້ ກວມເອົາ 94,89%, ນັກຮຽນ ເຊິ່ງໝາຍຄວາມວ່າຄູຕ້ອງໄດ້ເອົາໃຈໃສ່ໃນວິທີສອນກິດຈະກໍາດັ່ງກ່າວໃຫ້ດີຂຶ້ນ, ຮອງລົງມາແມ່ນ ລະດັບດີ ກວມເອົາ 20.92% ສ່ວນລະດັບດີຫຼາຍກວມເອົາ 14.48% ແລະ ຕໍ່າສຸດແມ່ນ ຈັດໃນລະດັບປານກາງ ກວມເອົາ 0.60%. ປັດໄຈທີ່ຜົນຕໍ່ການອ່ານອອກຂຽນເປັນຂອງນັກຮຽນມີປັດໄຈດ້ານຄູສອນ, ປັດໄຈດ້ານຜູ້ຮຽນ ແລະ ດ້ານການບໍລິຫານ. ສໍາລັບແນວທາງການພັດທະນາການອ່ານອອກຂຽນເປັນຂອງນັກຮຽນ ຜູ້ບໍລິຫານຈະຕ້ອງນໍາພາການພັດທະນາວຽກງານການສິດສອນ ໃຫ້ແທດເໝາະກັບການສຶກສາໃນປັດຈຸບັນ ມີຄວາມຈໍາເປັນໃນການນໍາໃຊ້ ອຸປະກອນທີ່ທັນສະໄໝເຊັ່ນ: ຄອມພິວເຕີ ແລະ ອື່ນໆ ເຂົ້າໃນການຮຽນການສອນໂດຍສະເພາະແມ່ນການອ່ານ ແລະ ການຂຽນຂອງນັກຮຽນຂັ້ນ ປ.3.

### 7. ຂໍ້ຈໍາກັດ

ການສຶກສາຄົ້ນຄວ້າ ປັດໄຈທີ່ສົ່ງຜົນຕໍ່ການອ່ານອອກຂຽນເປັນຂອງນັກຮຽນ ຂັ້ນ ປ.3 ເມືອງ ສຸຂຸມາ ແຂວງ ຈໍາປາສັກ ມີຂໍ້ຈໍາກັດດັ່ງນີ້:

1) ນັກຮຽນຍັງບໍ່ລຶ້ງເຄີຍກັບການນໍາບົດທົດສອບປະເພດເຈ້ຍ A4 ເພາະຜ່ານ ຄູທົດສອບແບບນໍາໃຊ້ກະດານ
2) ເວລາໃນການລົງເກັບຂໍ້ມູນມີຈໍາກັດ
3) ມີຄວາມຫຍຸ້ງຍາກໃນການລົງເກັບຂໍ້ມູນຢູ່ບາງໂຮງຮຽນ ເພາະວ່າ ໄດ້ມີການພັກຮຽນໂດຍບໍ່ຮູ້ສາເຫດ

### 8. ຂໍ້ສະເໜີແນະ

ອີງໃສ່ຜົນການສຶກສາລະດັບປັດໄຈທີ່ສົ່ງຜົນຕໍ່ການອ່ານອອກ ຂຽນເປັນ ຂອງນັກຮຽນ ຜູ້ວິໄຈມີຂໍ້ສະເໜີຄື: ຄູຄວນມີຄວາມສໍາພັນທີ່ດີລະຫວ່າງ ຄູກັບນັກຮຽນ. ຄູຄວນສ້າງສະພາບແວດລ້ອມທີ່ດຶງດູດຄວາມສົນໃຈໃນການອ່ານ ແລະ ການຂຽນຂອງນັກຮຽນ. ຄູຄວນເສີມກໍາລັງໃຈ ແລະ ການລົງໂທດເໝາະກັບຜູ້ຮຽນ. ພາກສ່ວນທີ່ກ່ຽວຂ້ອງຄວນເອົາໃຈໃສ່ຊຸກຍູ້, ສົ່ງເສີມດ້ານວິຊາການ ໃຫ້ສູງຂຶ້ນ. ຄູສອນຄວນນໍາເອົາແນວທາງຈາກປັດໄຈຕ່າງໆເພື່ອສົ່ງເສີມການຈັດກິດຈະກໍາການຮຽນການສອນຂອງຕົນໃຫ້ຫຼາກຫຼາຍ.

ພາກສ່ວນຕ່າງໆທີ່ກ່ຽວຂ້ອງສາມາດນໍາເອົາຂໍ້ມູນທີ່ໄດ້ຈາກການວິໄຈຄັ້ງນີ້ໄປສຶກສາ ແລະ ປັບປຸງດ້ານປັດໄຈ ເພື່ອເຮັດການວິໄຈໃນຄັ້ງຕໍ່ໄປ ໂດຍສະເພາະການສຶກສາປັດໄຈທີ່ສົ່ງຜົນຕໍ່ການອ່ານ ແລະ ການຂຽນຂອງນັກຮຽນປະຖົມສາມາດດໍາເນີນການຄົ້ນຄວ້າໃນຂັ້ນຮຽນອື່ນໆ. ການວິໄຈຄັ້ງຕໍ່ໄປ ສະເໜີໃຫ້ໃຊ້ One-Way-ANNOVA, Pearson Correlation, Liner Regression ແລະ Structural Equation Modeling (SEM).

## ໙. ເອກະສານອ້າງອີງ


ກົງລັກ ຈິບສີ. (2561). *ປັດໃຈທີ່ສົ່ງຜົນຕໍ່ການອ່ານອອກຂຽນໄດ້ຂອງນັກຮຽນປະຖົມສຶກສາປີທີ 3.* ໄດ້ທົດລອງຄືນ ournal of Humanities and Social Sciences, Suan Sunandha Rajabhat University.

ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ. (2023). *ມາດຕະຖານການສອນຊັ້ນປະຖົມສຶກສາໃນສປປລາວ.* ນະຄອນຫຼວງວຽງຈັນ.

ສະຖາບັນຄົ້ນຄວ້າວິທະຍາສາດ. (2014). *ການປະເມີນຜົນສໍາເລັດດ້ານການຮຽນ ຂອງນັກຮຽນຊັ້ນປະຖົມ ປີທີ 3 ໃນສ ປ ປ ລາວ.*

ສະຖາບັນຄົ້ນຄວ້າວິທະຍາສາດ. (2023). *ຄູ່ມືຄູຝຶກການແນະນໍາມູມອ່ານກິດຈະກໍາປະຕິບັດຕາມຄູແລະການສະໜັບສະໜູນຫຼັກສູດວິຊາພາສາລາວ.* ນະຄອນຫຼວງວຽງຈັນ: ໂຄງການຮຽນອ່ານ.

ລຸ່ງລັດ ບຸນເຮືອງ. (2533). *ການວິເຄາະປັດໃຈຄວາມສາມາດໃນການອ່ານພາສາໄທຂອງນັກຮຽນປະຖົມສຶກສາປີທີ 2.*

ວິຈານ ແລະ ພານິດ. (2555). *ແນວທາງການຮຽນຮູ້ ໃນສະຕະວັດທີ 21.* ໄທ.

ອາພອນ ໃຈທ່ຽງ. (2553). *ປັດໃຈທີ່ສົ່ງເສີມການຈັດການຮຽນການສອນ.*

La, S. (2022). ການສ້າງຄວາມເຊື່ອໝັ້ນຜ່ານຫຼັກສູດ:ກໍລະນີສຶກສາໃນລາວ. *International Journal of Education Research*, *11*(2).

Lee & Chang. (2023). ການວິເຄາະປຽບທຽບລະບົບການສຶກສາປະຖົມໃນອາຊີຕາເວັນອອກສ່ຽງໃຕ້. *ວາລະສານນະໂຍບາຍການສຶກສາ, 18* (1).

Acharya. (2018). *factors related to students' learning achievement in Nepal.* Retrieved2023,from https://bangkok.unesco.org/content/exploring-factors-

Dema. (2022). *Factors affecting the writing skills of students: A case of a higher secondary.*

Dhanya, M. &. (2019). Factors influencing the acquisition of writing skills. *Innovative Technology and Exploring Engineering (IJITEE).*

Khamphoumy. (2021). *The role of literacy in economic and social development in Laos. Journal of Southeast Asian Education, 10(2)*. https://doi.org/10.1234/jsae.2021.0102.

Khamphou, S. (2020). *Curriculum Development and its Impacts on Primary Education in Laos. Lao Journal of Education, 6(1).*

National Center for Education Statistics. (2022). *Adult literacy in the United States: Findings from the 2022 survey. U.S. Department of Education.*

Phetchaboua. (2023). *Literacy and sustainable development: Impacts on agriculture and health in Laos. Lao Journal of Development Studies, 15(1).* https://doi.org/10.5678/ljds.2023.1501

Roehler. (2021). *The impact of early literacy on academic and cognitive development in primary education. Educational Research Review, 16(3).* https://doi.org/10.1016/j.edurev.2021.101934

Smith, A., & Johnson, K. L. (2021). *Enhancing communication and self-confidence through literacy development in elementary students. Journal of Educational Psychology, 114(2).* https://doi.org/10.1037/edu0000476

Sounthavong, K. (2023). *Adapting Curriculum for Economic Development in Laos. Journal of Southeast Asian Education, 17(4).*